ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 313 /ລບ
ນະຄອນຫຼວງວຽງຈັນ, ວັນທີ 06 / 06 / 25

ດຳລັດ
ວ່າດ້ວຍນິຄົມອຸດສາຫະກຳ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;
- ອີງຕາມ ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 62/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາ ນະໂຍບາຍສົ່ງເສີມພິເສດ ພັດທະນານິຄົມອຸດສາຫະກຳ ສະບັບເລກທີ 141/ຄປຈ, ລົງວັນທີ 05 ພຶດສະພາ 2025;
- ອີງຕາມ ໜັງສືສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0992/ອຄ, ລົງວັນທີ 05 ມິຖຸນາ 2025.

ລັດຖະບານ ອອກດຳລັດ:

ພາກທີ I
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບນະໂຍບາຍໃນການພັດທະນາ, ຄຸ້ມຄອງ ແລະ ຕິດຕາມກວດກາ ນິຄົມອຸດສາຫະກຳ ເພື່ອສ້າງເງື່ອນໄຂເອື້ອອຳນວຍ ໃຫ້ແກ່ການເຄື່ອນໄຫວ ແລະ ການລົງທຶນໃນນິຄົມອຸດສາຫະກຳ ແນໃສ່ສົ່ງເສີມ ແລະ ພັດທະນາອຸດສາຫະກຳ ໃຫ້ຂະຫຍາຍຕົວຕາມທິດທັນເປັນອຸດສາຫະກຳ, ທັນສະໄໝ, ສີຂຽວ ແລະ ຍືນຍົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ເຂັ້ມແຂງ ແລະ ໝັ້ນຄົງ.

ມາດຕາ 2 ນິຄົມອຸດສາຫະກຳ

ນິຄົມອຸດສາຫະກຳ ແມ່ນ ຂອບເຂດພື້ນທີ່ ທີ່ໄດ້ຮັບອະນຸຍາດ ໃຫ້ພັດທະນາລະບົບໂຄງລ່າງພື້ນຖານດ້ານເຕັກນິກ ເຊັ່ນ: ລະບົບ ເສັ້ນທາງ, ໄຟຟ້າ, ນ້ຳປະປາ, ໂທລະຄົມມະນາຄົມ, ລະບາຍນ້ຳ, ບຳບັດສິ່ງເສດເຫຼືອ, ປ້ອງກັນນ້ຳຖ້ວມ, ອາຄານ, ທີ່ຢູ່ອາໄສ, ສາງ, ປ້ອງກັນອັກຄີໄພ ແລະ ສິ່ງອຳນວຍຄວາມສະດວກອື່ນ ທີ່ຈຳເປັນ ເພື່ອຮອງຮັບໃຫ້ແກ່ການລົງທຶນກິດຈະການໂຮງງານອຸດສາຫະກຳ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ພັດທະນາ** ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດ ໃຫ້ລົງທຶນພັດທະນານິຄົມອຸດສາຫະກຳ;
2. **ຜູ້ລົງທຶນ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດ ໃຫ້ລົງທຶນດຳເນີນທຸລະກິດການຜະລິດ ແລະ ກິດຈະການອື່ນທີ່ປິ່ນອ້ອມ ເປັນຕົ້ນ ສູນຝຶກອົບຮົມວິຊາຊີບ ສຳລັບອຸດສາຫະກຳ, ຮ້ານຄ້າ, ຮ້ານອາຫານ ໃນນິຄົມອຸດສາຫະກຳ;
3. **ໃບຢັ້ງຢືນສິດນຳໃຊ້ທີ່ດິນ** ໝາຍເຖິງ ເອກະສານຢັ້ງຢືນສິດນຳໃຊ້ທີ່ດິນ ໃນນິຄົມອຸດສາຫະກຳ ທີ່ອອກໂດຍຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ໃຫ້ຜູ້ລົງທຶນຕາມໄລຍະເວລາທີ່ໄດ້ຮັບສິດນຳໃຊ້ຈາກຜູ້ພັດ ທະນາ ຊຶ່ງມີຜົນສັກສິດນຳໃຊ້ຖືກຕ້ອງຕາມລະບຽບກົດໝາຍ ຄື: ສາມາດ ໃຫ້ເຊົ່າ, ມອບ, ໂອນຕໍ່, ນຳໃຊ້ ເປັນຫຼັກຊັບຄ້ຳປະກັນ ແລະ ອື່ນໆ ຕາມທີ່ກຳນົດໃນກົດໝາຍວ່າດ້ວຍທີ່ດິນ ແລະ ນິຕິກຳທີ່ກ່ຽວ ຂ້ອງ;
4. **ຫາງແຮ່** ໝາຍເຖິງ ແຮ່ທາດດຽວກັນຈຳນວນໃດໜຶ່ງທີ່ຕົກແຮ່ຍ, ເຈືອປົນກັບສິ່ງເສດເຫຼືອ ຊຶ່ງບໍ່ສາ ມາດເກັບກູ້ໄດ້ໝົດຈາກການຂຸດຄົ້ນ, ການຜະລິດ ແລະ ການລ້າງກັ່ນ;
5. **ແຮ່ຕິດພັນ** ໝາຍເຖິງ ແຮ່ທາດອື່ນທີ່ ຮ່ວມມາໃນສົນແຮ່ດຽວກັນກັບແຮ່ຫຼັກ, ເປັນກຸ່ມແຮ່ທາດ ທີ່ບໍ່ ສາມາດແຍກຈາກກັນໄດ້ ໃນຂະບວນການຂຸດຄົ້ນ;
6. **ຝຸ່ນອະນົງຄະທາດ** ໝາຍເຖິງ ຝຸ່ນທີ່ໄດ້ມາຈາກການຂະບວນການສັງເຄາະທາງເຄມີ ທີ່ມີການກຳນົດ ທາດອາຫານຫຼັກຂອງພືດ ເປັນຕົ້ນ ທາດໄນໂຕຼເຈນ (N), ຟອສ໌ເຟດ (P), ໂປຕັສຊຽມ (K);
7. **ຕ່ອງໂສການຜະລິດ** ໝາຍເຖິງ ການຜະລິດ ແລະ ການສະໜອງ ຂອງອຸດສາຫະກຳປຸງແຕ່ງ ທີ່ເປັນລະ ບົບເກາະກ່ຽວກັນ ໃນກຸ່ມເຄືອຂ່າຍອຸດສາຫະກຳໃດໜຶ່ງ ຊຶ່ງຜະລິດຕະພັນຂອງໂຮງງານໜຶ່ງສະໜອງ ໃຫ້ໂຮງງານອື່ນ ເພື່ອປຸງແຕ່ງເປັນຜະລິດຕະພັນໃໝ່;
8. **ໂຄງລ່າງພື້ນຖານເຊື່ອມຕໍ່ນິຄົມອຸດສາຫະກຳ** ໝາຍເຖິງ ລະບົບ ເສັ້ນທາງ, ໄຟຟ້າ, ນ້ຳປະປາ, ໂທລະ ຄົມມະນາຄົມ ແລະ ລະບົບການລະບາຍນ້ຳ ທີ່ເຊື່ອມຕໍ່ນິຄົມອຸດສາຫະກຳກັບຈຸດໃດໜຶ່ງຢູ່ນອກນິຄົມ ອຸດສາຫະກຳ ເປັນຕົ້ນ ເສັ້ນທາງຫຼວງ, ສະຖານີຂົນສົ່ງ, ສະໜາມບິນ, ສະຖານີໄຟຟ້າ, ທໍ່ສົ່ງນ້ຳປະປາ, ຫ້ວຍນ້ຳ ຫຼື ຄອງນ້ຳໃຫຍ່.

ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບນິຄົມອຸດສາຫະກຳ

ລັດ ເອົາໃຈໃສ່ ພັດທະນາວຽກງານນິຄົມອຸດສາຫະກຳ ດ້ວຍການສ້າງບຸກຄະລາກອນ, ສ້າງໂຄງລ່າງ ພື້ນຖານ, ສະໜອງງົບປະມານ ແລະ ວັດຖຸປະກອນທີ່ຈຳເປັນ ພ້ອມທັງສ້າງເງື່ອນໄຂ ແລະ ອຳນວຍຄວາມສະ ດວກ ໃຫ້ວຽກງານດັ່ງກ່າວ ດຳເນີນຢ່າງ ມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ສົ່ງເສີມ ບຸກຄົນ ຫຼື ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການພັດທະນານິ ຄົມອຸດສາຫະກຳ ແລະ ກິດຈະການປິ່ນອ້ອມ ທີ່ຢູ່ໃນຂອບເຂດນິຄົມອຸດສາຫະກຳ ໃຫ້ມີການຂະຫຍາຍຕົວ ແນໃສ່ຊຸກຍູ້ການຜະລິດ ໃຫ້ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ລັດ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ຜູ້ພັດທະນາ ແລະ ຜູ້ລົງທຶນ ສາມາດເຂົ້າເຖິງແຫຼ່ງ ທຶນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອສ້າງຄວາມເຂັ້ມແຂງ ໃນການພັດທະນານິຄົມອຸດສາຫະກຳ.

ລັດ ປົກປ້ອງ ສິດ ແລະ ຜົນປະໂຫຍດຂອງຜູ້ພັດທະນາ ແລະ ຜູ້ລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດ ສະບັບນີ້.

ມາດຕາ 5 ຫຼັກການເຄື່ອນໄຫວວຽກງານຂອງນິຄົມອຸດສາຫະກຳ

ການເຄື່ອນໄຫວວຽກງານຂອງນິຄົມອຸດສາຫະກຳ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາອຸດສາຫະກຳ ແລະ ການຄ້າ ແລະ ສົນຍາພັດທະນານິຄົມອຸດສາຫະກຳ;
2. ຮັບປະກັນ ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນນິຄົມອຸດສາຫະກຳ;
3. ຮັບປະກັນ ການພັດທະນາ ຕາມທິດສີຂຽວ ແລະ ຍືນຍົງ, ນຳໃຊ້ເຕັກໂນໂລຊີທີ່ເປັນມິດກັບສິ່ງແວດລ້ອມ ແລະ ປ່ອຍທາດອາຍເຮືອນແກ້ວຕ່ຳ, ປົກປັກຮັກສາສິ່ງແວດລ້ອມ ແລະ ການສົ່ງເສີມ ແລະ ອະນຸລັກວັດທະນະທຳອັນດີງາມຂອງຊາດ;
4. ຮັບປະກັນ ການນຳໃຊ້ທີ່ດິນຖືກຕ້ອງຕາມເປົ້າໝາຍ ໂດຍສອດຄ່ອງຕາມແຜນແມ່ບົດຈັດສັນທີ່ດິນ, ແຜນຍຸດທະສາດ, ແຜນການນຳໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ;
5. ຮັບປະກັນ ການຄຸ້ມຄອງບໍລິຫານໃຫ້ມີຄວາມສະດວກ, ວ່ອງໄວ, ປອດໄພ, ໂປ່ງໃສ ແລະ ທັນສະໄໝ;
6. ຮັບປະກັນ ການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ການມີສ່ວນຮ່ວມຂອງປະຊາຊົນ.

ມາດຕາ 6 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານນິຄົມອຸດສາຫະກຳ ຢູ່ ສປປ ລາວ.

ພາກທີ II
ການພັດທະນາ ແລະ ການລົງທຶນ ໃນນິຄົມອຸດສາຫະກຳ

ໝວດທີ 1
ການພັດທະນາ ນິຄົມອຸດສາຫະກຳ

ມາດຕາ 7 ການພັດທະນານິຄົມອຸດສາຫະກຳ

ການພັດທະນານິຄົມອຸດສາຫະກຳ ແມ່ນ ການລົງທຶນພັດທະນາໂຄງລ່າງພື້ນຖານ ເພື່ອຮອງຮັບການລົງທຶນ ຢູ່ໃນເຂດໃດໜຶ່ງ ໂດຍມີຂອບເຂດເນື້ອທີ່ຊັດເຈນ ຊຶ່ງມີຜູ້ພັດທະນາເປັນຜູ້ລົງທຶນພັດທະນາ ແລ້ວດຶງດູດນັກລົງທຶນເຂົ້າມາລົງທຶນຕາມຈຸດພິເສດຂອງແຕ່ລະເຂດ.

ການພັດທະນາ ນິຄົມອຸດສາຫະກຳ ຕ້ອງມີວັດຖຸປະສົງ ຈະແຈ້ງ, ແຜນການພັດທະນາ ທີ່ຊັດເຈນ ແລະ ເໝາະສົມ ຕາມຂະໜາດ ແລະ ຈຸດພິເສດຂອງແຕ່ລະນິຄົມອຸດສາຫະກຳ.

ນິຄົມອຸດສາຫະກຳ ສ້າງຂຶ້ນຢູ່ໃນ ຫຼື ຢູ່ນອກເຂດເສດຖະກິດພິເສດ, ຖ້າສ້າງຂຶ້ນໃນເຂດເສດຖະກິດພິເສດ ກົນໄກການສ້າງຕັ້ງ ແລະ ການຄຸ້ມຄອງ ແມ່ນປະຕິບັດຕາມກົດໝາຍ ວ່າດ້ວຍການສົ່ງເສີມ ການລົງທຶນ ແລະ ນິຕິກຳກ່ຽວກັບເຂດເສດຖະກິດພິເສດ. ພາຍຫຼັງສຳເລັດການເຊັນສັນຍາ ພັດທະນານິຄົມອຸດສາຫະກຳ ແລ້ວ ສະເໜີເຖິງກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອສ້າງຕັ້ງ ບໍລິສັດ ພັດທະນານິຄົມອຸດສາຫະກຳ ແລະ ສາມາດໄດ້ຮັບນະໂຍບາຍສົ່ງເສີມຕາມດຳລັດສະບັບນີ້.

ມາດຕາ 8 ມາດຕະຖານຂອງນິຄົມອຸດສາຫະກຳ

ນິຄົມອຸດສາຫະກຳ ມີມາດຕະຖານ ດັ່ງນີ້:

1. ມີເນື້ອທີ່ດິນ ສາມສິບ ເຮັກຕາ ຂຶ້ນໄປ;
2. ມີລະບົບ ເສັ້ນທາງ, ໄຟຟ້າ, ນ້ຳປະປາ, ໂທລະຄົມມະນາຄົມ;

3. ມີສຳນັກງານ, ຫ້ອງການ, ສາງ, ສູນຝຶກອົບຮົມວິຊາຊີບ ສຳລັບອຸດສາຫະກຳ, ທີ່ຢູ່ອາໄສ, ຮ້ານຄ້າ ແລະ ຮ້ານອາຫານ;
4. ມີລະບົບ ບຳບັດ ແລະ ກຳຈັດສິ່ງເສດເຫຼືອ, ລະບາຍນ້ຳ ແລະ ປ້ອງກັນນ້ຳຖ້ວມ;
5. ມີລະບົບການປ້ອງກັນຄວາມປອດໄພ ເປັນຕົ້ນ ການປ້ອງກັນອັກຄີໄພ, ການຕິດຕາມ ການເຂົ້າ-ອອກ, ຮົ້ວ ຫຼື ກຳແພງ ທີ່ໄດ້ມາດຕະຖານ;
6. ມີສິ່ງອຳນວຍຄວາມສະດວກອື່ນ ທີ່ຈຳເປັນ.

ມາດຕາ 9 ຮູບການ ການລົງທຶນພັດທະນານິຄົມອຸດສາຫະກຳ

ການລົງທຶນພັດທະນານິຄົມອຸດສາຫະກຳ ມີ ສາມ ຮູບການ ຄື:

1. ເອກະຊົນລົງທຶນ ຮ້ອຍສ່ວນຮ້ອຍ;
2. ລັດລົງທຶນ ຮ້ອຍສ່ວນຮ້ອຍ;
3. ລັດຮ່ວມທຶນ ກັບພາກສ່ວນອື່ນ.

ມາດຕາ 10 ເອກະຊົນລົງທຶນ ຮ້ອຍສ່ວນຮ້ອຍ

ເອກະຊົນລົງທຶນ ຮ້ອຍສ່ວນຮ້ອຍ ແມ່ນການລົງທຶນຂອງເອກະຊົນ ພາຍໃນ, ເອກະຊົນ ຫຼື ລັດວິສາຫະກິດ ຕ່າງປະເທດ ໂດຍມີຜູ້ລົງທຶນພຽງຜູ້ດຽວ ຫຼື ມີການຮ່ວມທຶນກັນ ເພື່ອພັດທະນານິຄົມອຸດສາຫະກຳ.

ມາດຕາ 11 ລັດລົງທຶນ ຮ້ອຍສ່ວນຮ້ອຍ

ລັດລົງທຶນຮ້ອຍສ່ວນຮ້ອຍ ແມ່ນການລົງທຶນດ້ວຍງົບປະມານຂອງລັດແຕ່ພຽງຜູ້ດຽວ ເພື່ອພັດທະນານິຄົມອຸດສາຫະກຳ.

ມາດຕາ 12 ລັດຮ່ວມທຶນ ກັບພາກສ່ວນອື່ນ

ລັດຮ່ວມທຶນກັບພາກສ່ວນອື່ນ ແມ່ນການລົງທຶນ ລະຫວ່າງ ລັດຖະບານ ສປປ ລາວ ກັບ ເອກະຊົນ ພາຍໃນ, ເອກະຊົນ ຫຼື ລັດວິສາຫະກິດຕ່າງປະເທດ ເພື່ອພັດທະນານິຄົມອຸດສາຫະກຳ.

ມາດຕາ 13 ການສະເໜີພັດທະນານິຄົມອຸດສາຫະກຳ

ການສະເໜີພັດທະນານິຄົມອຸດສາຫະກຳ ປະກອບມີ ຂັ້ນຕອນ ດັ່ງນີ້:

1. ສະເໜີເຖິງ ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາເຊັນບົດບັນທຶກຄວາມເຂົ້າໃຈ ດຳເນີນການສຶກສາຄວາມເປັນໄປໄດ້ ໃນການພັດທະນາ ນິຄົມອຸດສາຫະກຳ ໂດຍປະກອບເອກະສານ ຕາມຂໍ້ 1 ມາດຕາ 15 ຂອງດຳລັດສະບັບນີ້;
2. ສະເໜີເຖິງ ຄະນະກຳມະການສົ່ງເສີມການລົງທຶນ ເພື່ອພິຈາລະນາເຊັນສັນຍາ ພັດທະນານິຄົມອຸດສາຫະ ກຳ ໂດຍປະກອບເອກະສານ ຕາມຂໍ້ 2 ມາດຕາ 15 ຂອງດຳລັດສະບັບນີ້;
3. ສະເໜີເຖິງ ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອສ້າງຕັ້ງ ບໍລິສັດ ພັດທະນານິຄົມອຸດສາຫະກຳ ໂດຍປະກອບເອກະສານ ຕາມຂໍ້ 3 ມາດຕາ 15 ຂອງດຳລັດສະບັບນີ້.

ມາດຕາ 14 ເງື່ອນໄຂຂອງຜູ້ພັດທະນາ ນິຄົມອຸດສາຫະກຳ

ຜູ້ສະເໜີພັດທະນານິຄົມອຸດສາຫະກຳ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນ ທີ່ສ້າງຕັ້ງຂຶ້ນ ຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ;
2. ມີວັດຖຸປະສົງຈະແຈ້ງ, ແຜນການພັດທະນາທີ່ຊັດເຈນ ແລະ ເໝາະສົມ ຕາມແຕ່ລະຂະໜາດຂອງ ນິຄົມອຸດສາຫະກຳ;
3. ມີຖານະທາງດ້ານການເງິນ ຫຼື ແຫຼ່ງທຶນ ຊຶ່ງໄດ້ຮັບການຢັ້ງຢືນ ຈາກສະຖາບັນການເງິນ ພາຍໃນ ຫຼື ຕ່າງປະເທດ ທີ່ໜ້າເຊື່ອຖືໄດ້;

4. ບໍ່ເຄີຍຖືກສານຕັດສິນໃຫ້ລົ້ມລະລາຍ ຫຼື ລົງໂທດຕັດອິດສາລະພາບ ຍ້ອນການກະທຳຜິດ ໂດຍເຈດຕະນາ.

ມາດຕາ 15 ເອກະສານປະກອບສະເໜີ ຜັດທະນານິຕິບຸກຄົນອຸດສາຫະກຳ

ເອກະສານປະກອບສະເໜີ ຜັດທະນານິຕິບຸກຄົນອຸດສາຫະກຳ ມີດັ່ງນີ້:

1. ເອກະສານປະກອບສະເໜີເຊັນບົດບັນທຶກຄວາມເຂົ້າໃຈ
   1.1 ໜັງສືສະເໜີ ຂໍເຊັນບົດບັນທຶກຄວາມເຂົ້າໃຈ ສຶກສາຄວາມເປັນໄປໄດ້ ໃນການຜັດທະນານິຕິບຸກຄົນອຸດສາຫະກຳ ຕາມແບບຟອມ ທີ່ໄດ້ກຳນົດ;
   1.2 ໃບຢັ້ງຢືນຖານະການເງິນ;
   1.3 ບົດສະເໜີແຜນການຜັດທະນານິຕິບຸກຄົນອຸດສາຫະກຳ;
   1.4 ສັນຍາການຮ່ວມມືຜັດທະນາ ໃນກໍລະນີມີການຮ່ວມທຶນ;
   1.5 ແຜນວາດເບື້ອງຕົ້ນກ່ຽວກັບຂອບເຂດເນື້ອທີ່ດິນຂອງນິຕິບຸກຄົນອຸດສາຫະກຳ;
2. ເອກະສານປະກອບສະເໜີ ເຊັນສັນຍາຜັດທະນານິຕິບຸກຄົນອຸດສາຫະກຳ
   2.1 ໜັງສືສະເໜີ ຂໍຜັດທະນານິຕິບຸກຄົນອຸດສາຫະກຳ ຕາມແບບຟອມ ທີ່ໄດ້ກຳນົດ;
   2.2 ໃບຢັ້ງຢືນຮັບຮອງບົດວິພາກເສດຖະກິດ-ເຕັກນິກ;
   2.3 ແຜນແມ່ບົດການຜັດທະນາໂຄງການ ແລະ ແຜນຜັງການກໍ່ສ້າງເບື້ອງຕົ້ນ;
   2.4 ໃບຢັ້ງຢືນຮັບຮອງ ບົດສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດຕາມ ທີ່ກຳນົດໃນກົດໝາຍ ແລະ ລະບຽບ ການກ່ຽວກັບສິ່ງແວດລ້ອມ;
   2.5 ໃບຢັ້ງຢືນການສຳຫຼວດອັດແທກທີ່ດິນຂອງໂຄງການຈາກອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການກ່ຽວຂ້ອງ;
   2.6 ຮ່າງສັນຍາຜັດທະນານິຕິບຸກຄົນອຸດສາຫະກຳ.
3. ເອກະສານປະກອບສະເໜີ ສ້າງຕັ້ງບໍລິສັດ ຜັດທະນານິຕິບຸກຄົນອຸດສາຫະກຳ
   3.1 ໜັງສືສະເໜີຂໍສ້າງຕັ້ງບໍລິສັດ ຜັດທະນານິຕິບຸກຄົນອຸດສາຫະກຳ ຕາມແບບຟອມ ທີ່ໄດ້ກຳນົດ;
   3.2 ເອກະສານອື່ນ ຕາມທີ່ກຳນົດໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບການກ່ຽວຂ້ອງ.

ມາດຕາ 16 ຂັ້ນຕອນການອະນຸຍາດ ຜັດທະນານິຕິບຸກຄົນອຸດສາຫະກຳ

ການອະນຸຍາດ ຜັດທະນານິຕິບຸກຄົນອຸດສາຫະກຳ ມີຂັ້ນຕອນ ດັ່ງນີ້:

1. ການພິຈາລະນາ ເຊັນບົດບັນທຶກຄວາມເຂົ້າໃຈ ແມ່ນພາຍຫຼັງໄດ້ຮັບຄຳຮ້ອງຂໍອະນຸຍາດຜັດທະນານິຕິບຸກຄົນອຸດສາຫະກຳ ຄົບຖ້ວນຕາມຂໍ້ 1 ມາດຕາ 15 ຂອງດຳລັດສະບັບນີ້ແລ້ວ ຂະແໜງອຸດສາຫະກຳ ແລະ ການຄ້າ ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ເຊັນບົດບັນທຶກຄວາມເຂົ້າໃຈ ພາຍໃນເວລາ ຫົກສິບຫ້າ ວັນ;
2. ການພິຈາລະນາ ເຊັນສັນຍາຜັດທະນາໂຄງການ ແມ່ນພາຍຫຼັງສຳເລັດການສຶກສາຄວາມເປັນໄປໄດ້ ນິຕິບຸກຄົນອຸດສາຫະກຳ ຫຼື ປະຕິບັດຕາມເງື່ອນໄຂຕ່າງໆ ທີ່ກຳນົດໃນບົດບັນທຶກຄວາມເຂົ້າໃຈແລ້ວ, ຜູ້ຜັດທະນາ ປະກອບເອກະສານຕາມທີ່ກຳນົດໃນຂໍ້ 2 ມາດຕາ 15 ຂອງດຳລັດສະບັບນີ້ ສະເໜີເຖິງຄະນະກຳມະການສົ່ງເສີມການລົງທຶນ ເພື່ອສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າ ແລະ ສະເໜີອະນຸມັດເຊັນສັນຍາຕາມຂັ້ນຕອນ ພາຍໃນເວລາ ສາມສິບ ວັນ;
3. ພາຍຫຼັງ ເຊັນສັນຍາແລ້ວ ໃຫ້ຜູ້ຜັດທະນາ ປະກອບເອກະສານຕາມທີ່ກຳນົດໃນຂໍ້ 3 ມາດຕາ 15 ຂອງດຳລັດສະບັບນີ້ ສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາອະນຸຍາດສ້າງຕັ້ງ ບໍລິສັດ ຜັດທະນານິຕິບຸກຄົນອຸດສາຫະກຳດັ່ງກ່າວ ຕາມຂັ້ນຕອນ.

ມາດຕາ 17 ສິດຂອງຜູ້ພັດທະນາ ນິຄົມອຸດສາຫະກຳ

ຜູ້ພັດທະນາ ນິຄົມອຸດສາຫະກຳ ມີສິດ ດັ່ງນີ້:

1. ໄດ້ຮັບນະໂຍບາຍສົ່ງເສີມ ແລະ ອຳນວຍຄວາມສະດວກ ໃນການພັດທະນານິຄົມອຸດສາຫະກຳ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການລົງທຶນ ຕາມກົດໝາຍ ແລະ ລະບຽບການ;
3. ລົງທຶນຕາມປະເພດ, ຮູບການ ແລະ ຮູບແບບ ວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;
4. ພັດທະນາລະບົບພະລັງງານໄຟຟ້າ ເພື່ອຊົມໃຊ້ ພາຍໃນນິຄົມອຸດສາຫະກຳ;
5. ໃຫ້ຜູ້ລົງທຶນ ເຊົ່າທີ່ດິນ ໃນນິຄົມອຸດສາຫະກຳໂດຍບໍ່ໃຫ້ເກີນອາຍຸນຳໃຊ້ທີ່ດິນ ທີ່ຍັງເຫຼືອໃນສັນຍາ ແມ່ ແລະ ໄດ້ຮັບຜົນປະໂຫຍດອື່ນ ຈາກການພັດທະນານິຄົມອຸດສາຫະກຳ;
6. ເປັນເຈົ້າກຳມະສິດຕໍ່ຊັບສິນ ທີ່ຕົນໄດ້ພັດທະນາ ໃນນິຄົມອຸດສາຫະກຳ;
7. ນຳໃຊ້ທີ່ດິນນິຄົມອຸດສາຫະກຳ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ;
8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 18 ພັນທະຂອງຜູ້ພັດທະນາ ນິຄົມອຸດສາຫະກຳ

ຜູ້ພັດທະນາ ນິຄົມອຸດສາຫະກຳ ມີພັນທະ ດັ່ງນີ້:

1. ນຳທຶນເຂົ້າມາພັດທະນານິຄົມອຸດສາຫະກຳ ຕາມຈຳນວນ ແລະ ໄລຍະເວລາ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
2. ພັດທະນາ ລະບົບໂຄງລ່າງພື້ນຖານດ້ານເຕັກນິກ ແລະ ສິ່ງອຳນວຍຄວາມສະດວກອື່ນ ລວມທັງການຈັດສັນເນື້ອທີ່ດິນ ໃນນິຄົມອຸດສາຫະກຳ ຕາມບົດວິພາກເສດຖະກິດ-ເຕັກນິກ ທີ່ຖືກຮັບຮອງ;
3. ເຮັດບົດປະເມີນຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ ຕາມກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ພ້ອມທັງເອົາໃຈໃສ່ປົກປັກຮັກສາສິ່ງແວດລ້ອມ ລວມທັງການຈັດຕັ້ງປະຕິບັດການຊົດເຊີຍ, ການຈັດສັນທີ່ດິນ ແລະ ອາຊີບຄືນທີ່ ໃຫ້ຜູ້ທີ່ໄດ້ຮັບຜົນກະທົບຈາກການພັດທະນາ ຢ່າງເໝາະສົມ;
4. ສ້າງແຜນບຳເຂົ້າປະຈຳປີ ແລ້ວສະເໜີຕໍ່ຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ເພື່ອພິຈາລະນາອະນຸມັດ ຕາມລະບຽບການ;
5. ພັດທະນາສີມືແຮງງານລາວ, ຍົກລະດັບ, ຖ່າຍທອດບົດຮຽນ, ເຕັກນິກວິຊາການ ໃນການນຳໃຊ້ເຕັກໂນໂລຊີ ໃຫ້ແກ່ແຮງງານ ແລະ ບຸກຄະລາກອນຄົນລາວ ເພື່ອກາຍເປັນແຮງງານທີ່ມີຄຸນນະພາບ ຕອບສະໜອງຕາມຄວາມຕ້ອງການຂອງຕະຫຼາດແຮງງານພາຍໃນ;
6. ປະກອບສ່ວນ ໃນການພັດທະນາຊຸມຊົນ ແລະ ທ້ອງຖິ່ນ ພ້ອມທັງສ້າງເງື່ອນໄຂໃຫ້ປະຊາຊົນອ້ອມຂ້າງມີລາຍໄດ້ທີ່ໝັ້ນຄົງ ຈາກການພັດທະນານິຄົມອຸດສາຫະກຳ;
7. ສ້າງເງື່ອນໄຂໃຫ້ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດສະໜອງສິນຄ້າ ແລະ ການບໍລິການ ໃນນິຄົມອຸດສາຫະກຳ;
8. ເປີດບັນຊີເງິນຝາກສະເພາະ ຢູ່ທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ ແລະ ເຄື່ອນໄຫວຖືກຕ້ອງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ນິຕິກຳທີ່ກ່ຽວຂ້ອງ;
9. ຖືບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ນິຕິກຳທີ່ກ່ຽວຂ້ອງ;
10. ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຕາມນະໂຍບາຍ ທີ່ລະບຸໃນດຳລັດສະບັບນີ້, ຕາມສັນຍາພັດທະນານິຄົມອຸດສາຫະ ກຳ ແລະ ລະບຽບການທີ່ກ່ຽວຂ້ອງ;

11. ໃຫ້ການຮ່ວມມືກັບເຈົ້າໜ້າທີ່ລັດ ໃນການຄຸ້ມຄອງ ແລະ ຕິດຕາມ ກວດກາ ການພັດທະນາ ແລະ ການລົງທຶນ ໃນນິຄົມອຸດສາຫະກຳ;
12. ໃຫ້ບຸລິມະສິດແກ່ຊຸມຊົນອ້ອມຂ້າງ ໃນການເຂົ້າເຮັດວຽກໃນນິຄົມອຸດສາຫະກຳ; ສ້າງເງື່ອນໄຂໃນການຜະລິດ ເພື່ອສະໜອງສິນຄ້າ ແລະ ການບໍລິການ ໃຫ້ແກ່ນິຄົມອຸດສາຫະກຳ ພ້ອມທັງໃຫ້ການຊ່ວຍເຫຼືອໃນການພັດທະນາຄຸນນະພາບຂອງສິນຄ້າ ເພື່ອໃຫ້ໄດ້ ທັງປະລິມານ ແລະ ຄຸນນະພາບ ຕາມຄວາມຕ້ອງການ ຂອງຜູ້ພັດທະນາ ແລະ ຜູ້ລົງທຶນ;
13. ໃຫ້ການຮ່ວມມື ແລະ ປະກອບສ່ວນ ໃນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນຂອບເຂດນິຄົມອຸດສາຫະກຳ;
14. ສະຫຼຸບ ແລະ ລາຍງານ ການພັດທະນາ ແລະ ການເຄື່ອນໄຫວຂອງນິຄົມອຸດສາຫະກຳ ປະຈຳປີ ໃຫ້ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ;
15. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ໝວດທີ 2
ການລົງທຶນ ໃນນິຄົມອຸດສາຫະກຳ

ມາດຕາ 19 ການລົງທຶນ ໃນນິຄົມອຸດສາຫະກຳ

ການລົງທຶນ ໃນນິຄົມອຸດສາຫະກຳ ແມ່ນການລົງທຶນດຳເນີນກິດຈະການຕ່າງໆ ໂດຍສອດຄ່ອງຕາມແຜນແມ່ບົດ ແລະ ຖືກຕ້ອງ ຕາມເປົ້າໝາຍການພັດທະນາ ຂອງແຕ່ລະນິຄົມອຸດສາຫະກຳ, ໄດ້ຮັບການອະນຸຍາດຈາກຫ້ອງການຄຸ້ມຄອງ ຢູ່ພາຍໃນນິຄົມອຸດສາຫະກຳ ແລະ ໄດ້ຮັບນະໂຍບາຍ ຕາມທີ່ໄດ້ກຳນົດ ໃນກົດໝາຍ, ດຳລັດສະບັບນີ້ ແລະ ນະໂຍບາຍສະເພາະ ຕາມການຕົກລົງຂອງລັດຖະບານ.

ມາດຕາ 20 ການສະເໜີລົງທຶນຢູ່ໃນນິຄົມອຸດສາຫະກຳ

ບຸກຄົນ ແລະ ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງລົງທຶນ ໃນນິຄົມອຸດສາຫະກຳ ຕ້ອງ ຍື່ນຄຳຮ້ອງຕໍ່ຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ປະຈຳຢູ່ນິຄົມອຸດສາຫະກຳດັ່ງກ່າວ ເພື່ອພິຈາລະນາ ອອກ ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດອື່ນໆ ຕາມຂັ້ນຕອນ ເຊັ່ນ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ ຫຼື ໃບອະນຸຍາດດຳເນີນທຸລະກິດ, ໃບອະນຸຍາດປຸກສ້າງ, ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຕາມກົນໄກ ການບໍລິການປະຕູດຽວ ຢູ່ແຕ່ລະນິຄົມອຸດສາຫະກຳ.

ໃນກໍລະນີ ທີ່ນິຄົມອຸດສາຫະກຳ ສ້າງຕັ້ງຂຶ້ນຢູ່ໃນເຂດເສດຖະກິດພິເສດ ແມ່ນປະຕິບັດຕາມກົນໄກ ຂອງເຂດເສດຖະກິດພິເສດດັ່ງກ່າວ.

ສຳລັບຜູ້ພັດທະນາ ທີ່ມີຈຸດປະສົງລົງທຶນ ໃນກິດຈະການໃດໜຶ່ງ ໃນນິຄົມອຸດສາຫະກຳ ນອກຈາກ ການພັດທະນາໂຄງລ່າງພື້ນຖານດ້ານເຕັກນິກ ແລະ ສິ່ງອຳນວຍຄວາມສະດວກອື່ນທີ່ຈຳເປັນ ຕ້ອງໄດ້ສ້າງເປັນ ນິຕິບຸກຄົນໃໝ່.

ມາດຕາ 21 ການອອກໃບທະບຽນວິສາຫະກິດ

ການອອກໃບທະບຽນວິສາຫະກິດ ຂອງການລົງທຶນຢູ່ໃນນິຄົມອຸດສາຫະກຳ ແມ່ນອອກໂດຍເຈົ້າໜ້າ ທີ່ທະບຽນວິສາຫະກິດ ທີ່ໄດ້ຮັບມອບໝາຍໃຫ້ມີສິດອອກໃບທະບຽນວະສາຫະກິດ ຢູ່ໃນນິຄົມອຸດສາຫະກຳດັ່ງ ກ່າວ ໂດຍສອດຄ່ອງຕາມຫຼັກການ ທີ່ກຳນົດໃນກົດໝາຍວ່າດ້ວຍວິສາຫະກິດ.

ການພິຈາລະນາອອກໃບທະບຽນວິສາຫະກິດ ແມ່ນພາຍຫຼັງໄດ້ຮັບເອກະສານສະເໜີແຈ້ງຂຶ້ນທະບຽນ ວິສາຫະກິດ ຕາມທີ່ກຳນົດໃນ ມາດຕາ 22 ຂອງດຳລັດສະບັບນີ້ແລ້ວ ຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ

ຕ້ອງອອກໃບທະບຽນວິສາຫະກິດ ພາຍໃນ ສອງວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານ. ໃນກໍລະນີບໍ່ສາມາດອອກທະບຽນວິສາຫະກິດໄດ້ ຕ້ອງແຈ້ງຕອບທັນທີໃນເວລາຮັບເອກະສານ.

ມາດຕາ 22 ເອກະສານປະກອບແຈ້ງຂຶ້ນທະບຽນວິສາຫະກິດ

ເອກະສານປະກອບຂຶ້ນທະບຽນວິສາຫະກິດ ລົງທຶນໃນນິຕິບຸກຄົນອຸດສາຫະກຳ ມີດັ່ງນີ້:

1. ຄຳຮ້ອງຕາມແບບຟອມ;
2. ສັນຍາເຊົ່າທີ່ດິນ ຫຼື ສັນຍາໄດ້ຮັບສິດນຳໃຊ້ທີ່ດິນ ຢູ່ໃນນິຕິບຸກຄົນອຸດສາຫະກຳ;
3. ເອກະສານຢັ້ງຢືນຖານະການເງິນ.

ມາດຕາ 23 ການອອກໃບອະນຸຍາດປຸກສ້າງ ແລະ ໃບຢັ້ງຢືນສິ່ງແວດລ້ອມ

ການອອກໃບອະນຸຍາດປຸກສ້າງ ຢູ່ໃນນິຕິບຸກຄົນອຸດສາຫະກຳ ແມ່ນອອກໂດຍຫ້ອງການຄຸ້ມຄອງ ຂອງແຕ່ລະນິຕິບຸກຄົນອຸດສາຫະກຳ ໂດຍສອດຄ່ອງກັບລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ, ຮັບປະກັນຄວາມຖືກຕ້ອງທາງດ້ານມາດຕະຖານເຕັກນິກ ແລະ ຄວາມປອດໄພຂອງການກໍ່ສ້າງ.

ການອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຢູ່ໃນນິຕິບຸກຄົນອຸດສາຫະກຳ ແມ່ນອອກໂດຍຫ້ອງການຄຸ້ມຄອງຂອງແຕ່ລະນິຕິບຸກຄົນອຸດສາຫະກຳ ໂດຍຖືກຕ້ອງຕາມ ກົດໝາຍ, ລະບຽບການ ແລະ ສອດຄ່ອງຕາມມາດຕະຖານລວມຂອງນິຕິບຸກຄົນອຸດສາຫະກຳດັ່ງກ່າວ.

ມາດຕາ 24 ການອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ ແລະ/ຫຼື ໃບອະນຸຍາດດຳເນີນທຸລະກິດ

ການອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ ແລະ/ຫຼື ໃບອະນຸຍາດດຳເນີນທຸລະກິດ ຢູ່ໃນນິຕິບຸກຄົນອຸດສາຫະກຳ ແມ່ນອອກໂດຍຫ້ອງການຄຸ້ມຄອງ ຂອງແຕ່ລະນິຕິບຸກຄົນອຸດສາຫະກຳ. ສຳລັບກິດຈະການ ທີ່ຕ້ອງໄດ້ຮັບອະນຸຍາດດຳເນີນທຸລະກິດ ນຳຂະແໜງການທີ່ກ່ຽວຂ້ອງ ແມ່ນຫ້ອງການຄຸ້ມຄອງນິຕິບຸກຄົນອຸດສາຫະກຳ ປະສານກັບຂະແໜງການກ່ຽວຂ້ອງ ເພື່ອອອກໃບອະນຸຍາດດຳເນີນທຸລະກິດ. ໃນກໍລະນີທີ່ຂະແໜງການກ່ຽວຂ້ອງ ມອບສິດໃຫ້ ແມ່ນສາມາດອອກດຳເນີນກິດຈະການນັ້ນໄດ້ເລີຍ ຊຶ່ງແຕ່ລະນິຕິບຸກຄົນອຸດສາຫະກຳສາມາດກຳນົດລະບຽບການສະເພາະ ໂດຍສອດຄ່ອງກັບລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ ເພື່ອກຳນົດຂັ້ນຕອນການອະນຸຍາດໃຫ້ມີຄວາມສະດວກ, ວ່ອງໄວ.

ມາດຕາ 25 ສິດຂອງຜູ້ລົງທຶນ ໃນນິຕິບຸກຄົນອຸດສາຫະກຳ

ຜູ້ລົງທຶນ ໃນນິຕິບຸກຄົນອຸດສາຫະກຳມີ ສິດ ດັ່ງນີ້:

1. ໄດ້ຮັບນະໂຍບາຍສົ່ງເສີມ ແລະ ອຳນວຍຄວາມສະດວກ ຈາກລັດ ແລະ ຜູ້ຜັດທະນານິຕິບຸກຄົນອຸດສາຫະກຳ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
2. ລົງທຶນ ຕາມປະເພດ, ຮູບການ ແລະ ຮູບແບບ ວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;
3. ສ້າງພະລັງງານໄຟຟ້າ ເພື່ອຊົມໃຊ້ ພາຍໃນນິຕິບຸກຄົນອຸດສາຫະກຳ;
4. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຈາກການລົງທຶນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
5. ໄດ້ຮັບຜົນປະໂຫຍດ ຈາກການເຊົ່າ, ນຳໃຊ້ທີ່ດິນ ຫຼື ສິ່ງປຸກສ້າງ ຕາມອາຍຸການເຊົ່າ, ໃຫ້ບຸກຄົນອື່ນສືບທອດສັນຍາເຊົ່າທີ່ດິນ ຫຼື ສິ່ງປຸກສ້າງ ຕາມອາຍຸສັນຍາຜັດທະນານິຕິບຸກຄົນອຸດສາຫະກຳ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
6. ເປັນເຈົ້າກຳມະສິດຕໍ່ຊັບສິນ ທີ່ຕົນໄດ້ລົງທຶນ ໃນນິຕິບຸກຄົນອຸດສາຫະກຳ ຕາມສັນຍາເຊົ່າ ຫຼື ສັນຍາຜັດທະນານິຕິບຸກຄົນອຸດສາຫະກຳ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
7. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 26 ພັນທະຂອງຜູ້ລົງທຶນ ໃນນິຄົມອຸດສາຫະກຳ

ຜູ້ລົງທຶນ ໃນນິຄົມອຸດສາຫະກຳ ມີພັນທະ ດັ່ງນີ້:

1. ນຳທຶນເຂົ້າມາລົງທຶນ ຕາມຈຳນວນ ແລະ ໄລຍະເວລາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
2. ເສຍ ພາສີ, ອາກອນ, ຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຢ່າງຄົບຖ້ວນ, ຖືກຕ້ອງ ແລະ ທັນເວລາ ຕາມກົດໝາຍ;
3. ເປີດບັນຊີເງິນຝາກສະເພາະ ຢູ່ທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ ແລະ ເຄື່ອນໄຫວຖືກຕ້ອງ ຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ນິຕິກຳທີ່ກ່ຽວຂ້ອງ;
4. ຖືບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ນິຕິກຳທີ່ກ່ຽວຂ້ອງ;
5. ນຳໃຊ້ແຮງງານລາວ ເປັນບຸລິມະສິດ ໂດຍສະເພາະແຮງງານ ໃນພື້ນທີ່ຊຸມຊົນອ້ອມຂ້າງ ໃຫ້ສາມາດເຂົ້າເຮັດວຽກ ໃນໂຮງງານຂອງຕົນເອງ ແລະ ພັດທະນາ ສີມືແຮງງານ, ວິຊາສະເພາະ ແລະ ສ້າງເງື່ອນໄຂໃຫ້ແຮງງານສາມາດເຂົ້າເຖິງລະບົບການປະກັນສັງຄົມ;
6. ສ້າງແຜນນຳເຂົ້າປະຈຳປີ ແລ້ວສະເໜີຕໍ່ຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ເພື່ອພິຈາລະນາອະນຸມັດ ຕາມລະບຽບການ;
7. ພັດທະນາຂະແໜງອຸດສາຫະກຳ ເປັນຕົ້ນ ອຸດສາຫະກຳປຸງແຕ່ງ ຢູ່ພາຍໃນ ດ້ວຍການຄົ້ນຄວ້າ ແລະ ພັດທະນາ, ຖ່າຍທອດ ຄວາມຮູ້, ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ ເພື່ອຜະລິດສິນຄ້າ ຢູ່ໃນນິຄົມອຸດສາຫະກຳ ໃຫ້ເປັນຜະລິດຕະພັນລາວ ທີ່ໄດ້ມາດຕະຖານລະດັບສາກົນ ແລະ ໃຫ້ນຳໃຊ້ວັດຖຸດິບ ທີ່ສາມາດຜະລິດໄດ້ຢູ່ພາຍໃນປະເທດ ໃຫ້ເປັນບຸລິມະສິດ ເຂົ້າໃນການຜະລິດ;
8. ໃຫ້ຄວາມຮ່ວມມື ແລະ ປະສານສົມທົບ ກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນຂອບເຂດ ໂຮງງານ ແລະ ນິຄົມອຸດສາຫະກຳ;
9. ລົງທຶນ ໃນນິຄົມອຸດສາຫະກຳ ແລະ ລາຍງານ ຜົນຄວາມຄືບໜ້າໃນການລົງທຶນ ໃຫ້ຫ້ອງການຄຸ້ມຄອງນິຄົມອຸດສາຫະກຳຊາບ ໃນແຕ່ລະໄລຍະ;
10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວລົງທຶນຂອງຕົນ ຕໍ່ຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ຢ່າງເປັນປົກກະຕິ;
11. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ພາກທີ III
ນະໂຍບາຍສົ່ງເສີມ ການພັດທະນາ ແລະ ການລົງທຶນ ໃນນິຄົມອຸດສາຫະກຳ

ໝວດທີ 1
ນະໂຍບາຍສົ່ງເສີມ ຜູ້ພັດທະນານິຄົມອຸດສາຫະກຳ

ມາດຕາ 27 ນະໂຍບາຍສົ່ງເສີມ ຜູ້ພັດທະນາ

ນະໂຍບາຍສົ່ງເສີມ ຜູ້ພັດທະນາ ນິຄົມອຸດສາຫະກຳ ປະກອບດ້ວຍ ນະໂຍບາຍສົ່ງເສີມດ້ານ ພາສີ, ອາກອນ, ການນຳໃຊ້ທີ່ດິນ, ການກໍ່ສ້າງພື້ນຖານໂຄງລ່າງ ແລະ ນະໂຍບາຍຊ່ວຍໜູນອື່ນ ຕາມທີ່ກຳນົດໄວ້ໃນດຳລັດສະບັບນີ້.

ມາດຕາ 28 ນະໂຍບາຍດ້ານພາສີ ແລະ ອາກອນ

ຜູ້ພັດທະນານິຄົມອຸດສາຫະກຳ ແມ່ນໄດ້ຮັບນະໂຍບາຍດ້ານ ພາສີ ແລະ ອາກອນ ປະກອບມີນະໂຍບາຍ ສິ່ງເສີມທົ່ວໄປ ແລະ ສິ່ງເສີມພິເສດ ຄືດັ່ງນີ້:

1. ນະໂຍບາຍສິ່ງເສີມທົ່ວໄປ ແມ່ນໄດ້ຮັບນະໂຍບາຍ ການຍົກເວັ້ນພາສີ ແລະ ອາກອນ ຕາມທີ່ກຳນົດໃນກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ແລະ ນິຕິກຳ ກ່ຽວກັບເຂດເສດຖະກິດພິເສດ ຄືກັບຜູ້ພັດທະນາ ເຂດເສດຖະກິດພິເສດ ຫຼື ເຂດເສດຖະກິດສະເພາະອື່ນທົ່ວໄປ;
2. ນະໂຍບາຍສິ່ງເສີມພິເສດ ແມ່ນໄດ້ຮັບນະໂຍບາຍດ້ານ ພາສີ ແລະ ອາກອນ ດັ່ງນີ້:
   2.1. ຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມ ໃນການນຳເຂົ້າຈາກຕ່າງປະເທດ ແລະ ການສະໜອງຢູ່ພາຍໃນປະເທດ ສຳລັບອຸປະກອນກໍ່ສ້າງໂຄງລ່າງພື້ນຖານ ຢູ່ພາຍໃນ ແລະ ເຊື່ອມຕໍ່ນິຄົມອຸດສາຫະກຳ, ການລົງທຶນກ່ຽວກັບການຜະລິດ ແລະ ການສະໜອງໄຟຟ້າ, ນ້ຳປະປາ, ໂທລະຄົມມະນາຄົມ, ການລົງທຶນກໍ່ສ້າງຕຶກອາຄານຮັບໃຊ້ການຜະລິດ, ສຳນັກງານຫ້ອງການ, ລະບົບສາງ, ປ້ອງກັນນ້ຳຖ້ວມ, ປ້ອງກັນອັກຄີໄພ, ບຳບັດນ້ຳເປື້ອນ ແລະ ກຳຈັດສິ່ງເສດເຫຼືອ ໃນນິຄົມອຸດສາຫະກຳ ຕາມແຜນພັດທະນາ ທີ່ກຳນົດໃນບົດສະເໜີພັດທະນາໂຄງການ;
   2.2. ຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມ ສຳລັບການນຳເຂົ້າກົນຈັກ ແລະ ພາຫະນະຮັບໃຊ້ການພັດທະນາໂຄງລ່າງພື້ນຖານ ຕາມແຜນພັດທະນາ ທີ່ກຳນົດໃນບົດສະເໜີພັດທະນາໂຄງການ;
   2.3. ຍົກເວັ້ນອາກອນມູນຄ່າເພີ່ມ ສຳລັບການກໍ່ສ້າງ ໂຄງລ່າງພື້ນຖານເສັ້ນທາງ, ລະບົບໄຟຟ້າ, ນ້ຳປະປາ, ລະບົບບຳບັດນ້ຳເປື້ອນ ແລະ ກຳຈັດສິ່ງເສດເຫຼືອ, ການກໍ່ສ້າງ ເພື່ອຮັບໃຊ້ສາທາລະນະທົ່ວໄປ;
   2.4. ຫຼຸດຜ່ອນອັດຕາອາກອນລາຍໄດ້ຈາກເງິນເດືອນ ສຳລັບຜູ້ອອກແຮງງານ ໂດຍອີງຕາມຈຸດພິເສດຂອງແຕ່ລະນິຄົມອຸດສາຫະກຳ.

ສຳລັບລາຍລະອຽດການໃຫ້ນະໂຍບາຍສິ່ງເສີມພິເສດດ້ານ ພາສີ ແລະ ອາກອນ ຕໍ່ຜູ້ພັດທະນານິຄົມອຸດສາຫະກຳ ທີ່ລັດຖະບານສິ່ງເສີມພິເສດ ໄດ້ກຳນົດໄວ້ໃນນິຕິກຳສະເພາະຂອງນິຄົມອຸດສາຫະກຳດັ່ງກ່າວ.

ມາດຕາ 29 ນະໂຍບາຍການນຳໃຊ້ທີ່ດິນ ພັດທະນານິຄົມອຸດສາຫະກຳ

ການພັດທະນານິຄົມອຸດສາຫະກຳ ແມ່ນ ສາມາດນຳໃຊ້ທີ່ດິນສ່ວນບຸກຄົນ, ສາມາດເຊົ່າທີ່ດິນ ບຸກຄົນ, ນິຕິບຸກຄົນ ແລະ ສຳປະທານດິນລັດ ຕາມນະໂຍບາຍ ຄືດັ່ງນີ້:

1. ນຳໃຊ້ທີ່ດິນສ່ວນບຸກຄົນ ຫຼື ນິຕິບຸກຄົນ ຊຶ່ງເຈົ້າຂອງດິນເປັນຜູ້ພັດທະນານິຄົມອຸດສາຫະກຳ ແມ່ນບໍ່ມີອາຍຸເວລາໂຄງການ ແຕ່ສາມາດໂອນສິດໃຊ້ທີ່ດິນໃຫ້ຜູ້ລົງທຶນນຳໃຊ້ ສູງສຸດບໍ່ເກີນ ຫ້າສິບ (50) ປີ ແລະ ສາມາດຕໍ່ໄດ້ສູງສຸດບໍ່ເກີນ ຊາວ (20) ປີ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ;
2. ເຊົ່າດິນສ່ວນບຸກຄົນ ຫຼື ນິຕິບຸກຄົນ ພັດທະນານິຄົມອຸດສາຫະກຳ ແມ່ນມີອາຍຸໂຄງການ ຂຶ້ນກັບຈຸດພິເສດຂອງແຕ່ລະນິຄົມອຸດສາຫະກຳ ແຕ່ສູງສຸດບໍ່ເກີນອາຍຸການເຊົ່າ ຕາມທີ່ກຳນົດໃນກົດໝາຍວ່າດ້ວຍທີ່ດິນ ແລະ ສາມາດໂອນສິດໃຊ້ທີ່ດິນໃຫ້ຜູ້ລົງທຶນໄດ້ຕາມອາຍຸໂຄງການ;
3. ສຳປະທານທີ່ດິນຂອງລັດ ພັດທະນານິຄົມອຸດສາຫະກຳ ແມ່ນມີອາຍຸໂຄງການ ຂຶ້ນກັບຈຸດພິເສດຂອງແຕ່ລະນິຄົມອຸດສາຫະກຳ ແຕ່ສູງສຸດບໍ່ເກີນອາຍຸສຳປະທານ ຕາມທີ່ກຳນົດໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ໄດ້ຮັບນະໂຍບາຍຍົກເວັ້ນຄ່າສຳປະທານທີ່ດິນຂອງລັດ ຕາມທີ່ກຳນົດໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ສາມາດໂອນສິດໃຊ້ທີ່ດິນໃຫ້ຜູ້ລົງທຶນໄດ້ຕາມອາຍຸໂຄງການ.

ມາດຕາ 30 ການຈັດສັນທີ່ດິນພາຍໃນນິຄົມອຸດສາຫະກຳ

ຜູ້ພັດທະນາ ສາມາດຈັດສັນທີ່ດິນ ໃນນິຄົມອຸດສາຫະກຳຂອງຕົນ ເພື່ອນຳໃຊ້ພື້ນທີ່ດິນເຂົ້າໃນເປົ້າໝາຍການດຳເນີນທຸລະກິດໂດຍກົງ ບໍ່ໃຫ້ເກີນ ແປດສິບ ສ່ວນຮ້ອຍ (80%) ຂອງເນື້ອທີ່ທັງໝົດ ສ່ວນທີ່ເຫຼືອ

ໃຫ້ຜັດທະນາເປັນພື້ນທີ່ສາທາລະນະປະໂຫຍດ ເປັນຕົ້ນ ສວນສາທາລະນະ ແລະ ພື້ນທີ່ສີຂຽວ.

ຜູ້ຜັດທະນາ ສາມາດຈັດສັນທີ່ດິນ ໃນນິຄົມອຸດສາຫະກຳຂອງຕົນ ອອກເປັນຕອນຍ່ອຍຕາມແຜນຜັດທະນາ ແລະ ສະເໜີຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ອອກໃບຢັ້ງຢືນສິດນຳໃຊ້ທີ່ດິນຂອງແຕ່ລະຕອນດິນຍ່ອຍ.

ມາດຕາ 31 ການໃຫ້ເຊົ່າ ແລະ ໃຫ້ສິດນຳໃຊ້ທີ່ດິນພາຍໃນນິຄົມອຸດສາຫະກຳ

ຜູ້ຜັດທະນາ ສາມາດໃຫ້ຜູ້ລົງທຶນ ເຊົ່າດິນໃນນິຄົມອຸດສາຫະກຳ ທີ່ໄດ້ຈັດສັນເປັນຕອນຍ່ອຍ ຊຶ່ງຜູ້ຜັດທະນາເຊັນສັນຍາເຊົ່າກັບຜູ້ລົງທຶນ ແລະ ເຊັນຢັ້ງຢືນຮັບຮູ້ໂດຍ ຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ.

ຜູ້ຜັດທະນາ ສາມາດໃຫ້ສິດນຳໃຊ້ທີ່ດິນ ທີ່ໄດ້ຈັດສັນເປັນຕອນຍ່ອຍ ໃຫ້ຜູ້ລົງທຶນນຳໃຊ້ຕາມກຳນົດເວລາ ທີ່ກຳນົດໃນມາດຕາ 29 ຂອງດຳລັດສະບັບນີ້.

ມາດຕາ 32 ການຜະລິດ ແລະ ສະໜອງ ພະລັງງານໄຟຟ້າ ແລະ ນ້ຳ

ຜູ້ຜັດທະນາ ສາມາດ ຜະລິດ ແລະ ສະໜອງ ພະລັງງານໄຟຟ້າ ແລະ ນ້ຳ ຢູ່ໃນນິຄົມອຸດສາຫະກຳ ດ້ວຍຕົນເອງ ເພື່ອການຊົມໃຊ້ຢູ່ພາຍໃນນິຄົມອຸດສາຫະກຳ ຕາມອາຍຸນິຄົມອຸດສາຫະກຳ ໂດຍປະຕິບັດຂັ້ນຕອນການອະນຸຍາດລົງທຶນ ແລະ ມາດ ຕະຖານເຕັກນິກການກໍ່ສ້າງ ຕາມລະບຽບການທີ່ຂະແໜງການທີ່ກ່ຽວຂ້ອງກຳນົດ.ໃນກໍລະນີຕ້ອງການສະໜອງພະລັງງານໄຟຟ້າ ແລະ ນ້ຳ ອອກນອກນິຄົມອຸດສາຫະກຳ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ໝວດທີ 2
ນະໂຍບາຍສົ່ງເສີມ ຜູ້ລົງທຶນ ໃນນິຄົມອຸດສາຫະກຳ

ມາດຕາ 33 ນະໂຍບາຍສົ່ງເສີມ ຜູ້ລົງທຶນ

ຜູ້ລົງທຶນ ໃນນິຄົມອຸດສາຫະກຳ ປະກອບມີ ກິດຈະການສົ່ງເສີມພິເສດ ແລະ ສົ່ງເສີມທົ່ວໄປ ຊຶ່ງຈະໄດ້ຮັບນະໂຍບາຍສົ່ງເສີມດ້ານ ພາສີ, ອາກອນ, ການນຳໃຊ້ທີ່ດິນ ແລະ ນະໂຍບາຍຊ່ວຍໜຸນອື່ນ ຕາມທີ່ກຳນົດໄວ້ໃນດຳລັດສະບັບນີ້.

ມາດຕາ 34 ກິດຈະການສົ່ງເສີມພິເສດ

ກິດຈະການສົ່ງເສີມພິເສດ ຕ້ອງເປັນກິດຈະການທີ່ ສອດຄ່ອງກັບແຜນຜັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ ແລະ ຈຸດພິເສດຂອງແຕ່ລະນິຄົມອຸດສາຫະກຳ ໂດຍພື້ນຖານ ມີກິດຈະການ ດັ່ງນີ້:

1. ອຸດສາຫະກຳປຸງແຕ່ງອາຫານ ແລະ ຜະລິດຕະພັນກະສິກຳ;
2. ອຸດສາຫະກຳ ຜະລິດ ຝຸ້ນ ຊີວະພາບ, ອະນົງຄະທາດ ແລະ ອາຫານສັດ;
3. ອຸດສາຫະກຳຜະລິດ ກົນຈັກ, ລົດຍົນ, ຊິ້ນສ່ວນປະກອບ ແລະ ອາໄຫຼ່ ລວມທັງອຸປະກອນຮັບໃຊ້ການກະເສດ;
4. ອຸດສາຫະກຳ ເອເລັກໂຕຣນິກ, ເຕັກໂນໂລຊີການສື່ສານ, ດິຈິຕອນ, ປັນຍາປະດິດ, ອຸປະກອນ ໄຟຟ້າ ແລະ ພະລັງງານທົດແທນ ລວມທັງແຜງ ແລະ ຊິ້ນສ່ວນພະລັງງານແສງອາທິດ;
5. ອຸດສາຫະກຳປຸງແຕ່ງຈາກຜະລິດຕະພັນແຮ່ທາດ ມາເປັນຜະລິດຕະພັນສຳເລັດຮູບ;
6. ອຸດສາຫະກຳ ເຄມີ, ການຢາ ແລະ ອຸປະກອນການແພດ.

ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບຂະແໜງການກ່ຽວຂ້ອງ ອອກຄຳແນະນຳ ລະອຽດກ່ຽວກັບ ແຕ່ລະກິດຈະການສົ່ງເສີມພິເສດ ທີ່ກຳນົດໃນມາດຕານີ້ ເພື່ອກຳນົດໃຫ້ຮັດກຸມ ແລະ ຊັດເຈນ.

ມາດຕາ 35 ກິດຈະການສົ່ງເສີມທົ່ວໄປ

ກິດຈະການສົ່ງເສີມທົ່ວໄປ ແມ່ນກິດຈະການ ທີ່ບໍ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງດຳລັດສະບັບນີ້ ຊຶ່ງເປັນກິດຈະການທີ່ໄດ້ຮັບນະໂຍບາຍຕາມຂໍ້ 1 ຂອງມາດຕາ 36 ຂອງດຳລັດສະບັບນີ້.

ມາດຕາ 36 ນະໂຍບາຍດ້ານ ພາສີ, ອາກອນ ແລະ ຄ່າຊົດເຊີຍອາກອນ

ຜູ້ລົງທຶນໃນນິຄົມອຸດສາຫະກຳ ແມ່ນ ໄດ້ຮັບນະໂຍບາຍດ້ານ ພາສີ, ອາກອນ ແລະ ຄ່າຊົດເຊີຍອາກອນ ປະກອບມີນະໂຍບາຍສົ່ງເສີມທົ່ວໄປ ແລະ ສົ່ງເສີມພິເສດ ດັ່ງນີ້:

1. ນະໂຍບາຍສົ່ງເສີມທົ່ວໄປ ແມ່ນໄດ້ຮັບນະໂຍບາຍດ້ານ ພາສີ ແລະ ອາກອນ ຕາມທີ່ກຳນົດໃນກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ແລະ ນິຕິກຳ ກ່ຽວກັບເຂດເສດຖະກິດພິເສດ;
2. ນະໂຍບາຍສົ່ງເສີມພິເສດ ແມ່ນໄດ້ຮັບນະໂຍບາຍດ້ານ ພາສີ ແລະ ອາກອນ ຕາມແຕ່ລະກໍລະນີ ດັ່ງນີ້:
   2.1 ຍົກເວັ້ນ ພາສີນຳເຂົ້າຈາກຕ່າງປະເທດ ສຳລັບການນຳເຂົ້າ ວັດຖຸດິບ, ວັດຖຸອຸປະກອນ ແລະ ຊິ້ນສ່ວນທີ່ຮັບໃຊ້ການຜະລິດ, ປຸງແຕ່ງເປັນຜະລິດຕະພັນ ເພື່ອຈຳໜ່າຍພາຍໃນ ທົດແທນການນຳເຂົ້າ;
   2.2 ງົດເກັບ ພາສີນຳເຂົ້າຈາກຕ່າງປະເທດ ສຳລັບການນຳເຂົ້າຊື່ວຄາວ ວັດຖຸດິບ, ວັດຖຸອຸປະກອນ ແລະ ຊິ້ນສ່ວນທີ່ຮັບໃຊ້ການຜະລິດ, ປະກອບ, ປຸງແຕ່ງເປັນຜະລິດຕະພັນ ເພື່ອສົ່ງອອກໄປຕ່າງປະເທດ;
   2.3 ຫຼຸດຜ່ອນ ພາສີຂາອອກ ສຳລັບລາຍການຜະລິດຕະພັນ ທີ່ຕ້ອງໄດ້ເສຍພາສີຂາອອກ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດວ່າດ້ວຍ ລາຍການສິນຄ້າ ແລະ ອັດຕາພາສີຂາອອກ;
   2.4 ຫຼຸດຜ່ອນ ອາກອນມູນຄ່າເພີ່ມ ໃນການນຳເຂົ້າຈາກຕ່າງປະເທດ ສຳລັບວັດຖຸດິບ, ແຮ່ທາດ, ວັດຖຸປະກອນ, ຊິ້ນສ່ວນທີ່ບໍ່ມີການຜະລິດຢູ່ພາຍໃນ ເພື່ອຮັບໃຊ້ ການຜະລິດ, ປຸງແຕ່ງ, ປະສົມ ຫຼື ການປະກອບຢູ່ພາຍໃນນິຄົມອຸດສາຫະກຳ ເພື່ອສົ່ງອອກໄປຕ່າງປະເທດ ຫຼື ຈຳໜ່າຍພາຍໃນປະເທດ;
   2.5 ຫຼຸດຜ່ອນ ອາກອນມູນຄ່າເພີ່ມ ສຳລັບການສະໜອງທີ່ເປັນຕ່ອງໂສ້ການຜະລິດ ຢູ່ໃນນິຄົມອຸດສາຫະກຳ;
   2.6 ຫຼຸດຜ່ອນ ຄ່າຊົດເຊີຍອາກອນທຳມະຊາດ ສຳລັບຫາງແຮ່ ແລະ ແຮ່ຕິດພັນ ທີ່ຮັບໃຊ້ເຂົ້າໃນການຜະລິດທີ່ເປັນຕ່ອງໂສ້ ໃນນິຄົມອຸດສາຫະກຳ;
   2.7 ຍົກເວັ້ນ ແລະ ຫຼຸດຜ່ອນ ອາກອນກຳໄລ ທີ່ສົ່ງເສີມພິເສດ ແລະ ສົ່ງເສີມທົ່ວໄປ ດັ່ງນີ້:
      2.7.1 ການລົງທຶນທີ່ຈະໄດ້ຮັບນະໂຍບາຍສົ່ງເສີມພິເສດດ້ານອາກອນກຳໄລ ແມ່ນການລົງທຶນໃນກິດຈະການສົ່ງເສີມພິເສດ ທີ່ລົງທຶນໃນນິຄົມອຸດສາຫະກຳ ທີ່ລັດຖະບານສົ່ງເສີມພິເສດເທົ່ານັ້ນ ໂດຍກຳນົດໃຫ້ນະໂຍບາຍໃນດຳລັດສະເພາະນິຄົມອຸດສາຫະກຳດັ່ງກ່າວ;
      2.7.2 ການລົງທຶນທີ່ໄດ້ຮັບນະໂຍບາຍສົ່ງເສີມທົ່ວໄປ ແມ່ນໄດ້ຮັບນະໂຍບາຍຕາມທີ່ກຳນົດໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.
   2.8 ຫຼຸດຜ່ອນອັດຕາອາກອນລາຍໄດ້ຈາກເງິນເດືອນ ສຳລັບຜູ້ອອກແຮງງານ ໂດຍອີງຕາມຈຸດພິເສດ ຂອງແຕ່ລະນິຄົມອຸດສາຫະກຳ.

ສຳລັບລາຍລະອຽດການໃຫ້ນະໂຍບາຍສົ່ງເສີມພິເສດດ້ານ ພາສີ ແລະ ອາກອນ ຕໍ່ຜູ້ລົງທຶນໃນນິຄົມອຸດສາຫະກຳທີ່ລັດຖະບານສົ່ງເສີມພິເສດ ໄດ້ກຳນົດໄວ້ໃນນິຕິກຳຕ່າງຫາກ.

ມາດຕາ 37 ນະໂຍບາຍໃນການນຳໃຊ້ທີ່ດິນໃນນິຄົມອຸດສາຫະກຳ

ຜູ້ລົງທຶນ ມີສິດນຳໃຊ້ທີ່ດິນທີ່ຕົນໄດ້ຮັບສິດນຳໃຊ້ຈາກຜູ້ພັດທະນາ ໂດຍສາມາດເອົາສິດດັ່ງກ່າວໃຫ້ເຊົ່າຕໍ່, ມອບ, ໂອນ ໃຫ້ຜູ້ລົງທຶນອື່ນ ຫຼື ນຳໃຊ້ເປັນຫຼັກຊັບຄ້ຳປະກັນ ຕາມກຳນົດເວລາທີ່ໄດ້ຮັບສິດນຳໃຊ້ທີ່ດິນ ໂດຍຜ່ານການຢັ້ງຢືນຂອງຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ.

ມາດຕາ 38 ນະໂຍບາຍ ກ່ຽວກັບການເກັບຮັກສາວັດຖຸດິບ ແລະ ອຸປະກອນ

ຜູ້ລົງທຶນ ສາມາດນຳເຂົ້າ ແລະ ເກັບມ້ຽນ ວັດຖຸດິບ ແລະ ວັດຖຸປະກອນ ຢູ່ສາງສິນຄ້າ ຂອງບັນດາໂຮງງານ ຫຼື ສະຖານທີ່ ທີ່ລັດຖະການພາສີກຳນົດ ພາຍໃນເວລາສູງສຸດບໍ່ເກີນ ສາມ ປີ ເພື່ອຜະລິດ, ປະກອບ, ດັດແປງ, ປຸງແຕ່ງ, ຫຸ້ມຫໍ່ ຫຼື ສ້ອມແປງແລ້ວສົ່ງອອກຄືນ.

ໝວດທີ 3
ນະໂຍບາຍຊ່ວຍໜູນອື່ນ ແກ່ຜູ້ພັດທະນາ ແລະ ຜູ້ລົງທຶນ ໃນນິຄົມອຸດສາຫະກຳ

ມາດຕາ 39 ນະໂຍບາຍກ່ຽວກັບການນຳໃຊ້ວັດຖຸປະກອນ, ວັດສະດຸກໍ່ສ້າງ

ຜູ້ພັດທະນາ ແລະ ຜູ້ລົງທຶນ ທີ່ນຳໃຊ້ວັດຖຸປະກອນ, ວັດສະດຸກໍ່ສ້າງ ລວມທັງ ວັດຖຸດິບ, ຊິ້ນສ່ວນທີ່ສາມາດຜະລິດ ແລະ ສະໜອງໄດ້ພາຍໃນປະເທດ ເປັນບຸລິມະສິດ ເພື່ອຮັບໃຊ້ເຂົ້າໃນການກໍ່ສ້າງ, ຜະລິດ, ປຸງແຕ່ງ, ປະສົມ ຂອງຜູ້ພັດທະນາ ແລະ ຜູ້ລົງທຶນ ໄດ້ຮັບນະໂຍບາຍສົ່ງເສີມພິເສດ ສຳລັບອາກອນມູນຄ່າເພີ່ມ ທີ່ກຳນົດໄວ້ໃນດຳລັດສະເພາະ ຂອງແຕ່ລະນິຄົມອຸດສາຫະກຳ. ສຳລັບການສະໜອງຜະລິດຕະພັນດັ່ງກ່າວ ຈາກຜູ້ດຳເນີນທຸລະກິດຢູ່ນອກນິຄົມອຸດສາຫະກຳ ໃຫ້ຜູ້ພັດທະນາ ແລະ ຜູ້ລົງທຶນ ໃນນິຄົມອຸດສາຫະກຳ ແມ່ນໃຫ້ປະຕິບັດຫຼັກການດຽວກັບການສົ່ງອອກໄປຕ່າງປະເທດ.

ມາດຕາ 40 ການໃຫ້ວີຊາ ເຂົ້າ-ອອກ ຫຼາຍເທື່ອ

ຜູ້ພັດທະນາ ແລະ ຜູ້ລົງທຶນ ໃນນິຄົມອຸດສາຫະກຳ ພ້ອມດ້ວຍຄອບຄົວ ແລະ ຜູ້ຊ່ຽວຊານສະເພາະດ້ານ ທີ່ຈັດຈ້າງໂດຍ ຜູ້ພັດທະນາ ຫຼື ຜູ້ລົງທຶນ ຈະໄດ້ຮັບນະໂຍບາຍ ວີຊາ ເຂົ້າ-ອອກ ຫຼາຍເທື່ອ ຄັ້ງທຳອິດ ເປັນເວລາ ສິບ ປີ ແລະ ສາມາດຕໍ່ໄດ້.

ມາດຕາ 41 ການນຳໃຊ້ ແຮງງານຕ່າງປະເທດ

ຜູ້ພັດທະນາ ແລະ ຜູ້ລົງທຶນ ໃນນິຄົມອຸດສາຫະກຳ ສາມາດຈ້າງຜູ້ອອກແຮງງານ, ນັກວິຊາການ, ຜູ້ຊ່ຽວຊານ ເພື່ອເຂົ້າມາເຮັດວຽກໃນວິສາຫະກິດຂອງຕົນ ແລະ ນຳເຂົ້າຜູ້ອອກແຮງງານຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແຮງງານ. ໃນກໍລະນີ ຕ້ອງການນຳໃຊ້ແຮງງານເກີນກົດໝາຍກຳນົດ ໃຫ້ຜູ້ພັດທະນາ ຫຼື ຜູ້ລົງທຶນ ສະເໜີຕໍ່ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ພິຈາລະນາຕາມຄວາມເໝາະສົມ ບົນພື້ນຖານການປະສານສົມທົບກັບກະຊວງທີ່ກ່ຽວຂ້ອງ.

ມາດຕາ 42 ການອອກບັດອະນຸຍາດພັກເຊົາ ແລະ ບັດອະນຸຍາດເຮັດວຽກ

ຜູ້ພັດທະນາ, ຜູ້ລົງທຶນ, ຜູ້ຊ່ຽວຊານ, ນັກວິຊາການ ແລະ ຜູ້ອອກແຮງງານ ທີ່ເປັນຄົນຕ່າງປະເທດ ຢູ່ໃນນິຄົມອຸດສາຫະກຳ ຈະໄດ້ຮັບ ບັດອະນຸຍາດພັກເຊົາ, ບັດອະນຸຍາດເຮັດວຽກ ຕາມທີ່ກຳນົດໃນກົດໝາຍວ່າດ້ວຍການ ສົ່ງເສີມການລົງທຶນ ແລະ ນິຕິກຳທີ່ກ່ຽວຂ້ອງ.

ຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ເປັນຜູ້ປະສານງານກັບຂະແໜງການກ່ຽວຂ້ອງ ໃນການອອກບັດອະນຸຍາດພັກເຊົາ ແລະ ບັດອະນຸຍາດເຮັດວຽກ ເພື່ອອຳນວຍຄວາມສະດວກແກ່ການດຳລົງຊີວິດ, ການດຳເນີນທຸລະກິດພາຍໃນນິຄົມອຸດສາຫະກຳ ແລະ ເຂົ້າ-ອອກ ສປປ ລາວ.

ມາດຕາ 43 ການເຂົ້າເຖິງ ຂໍ້ມູນຂ່າວສານ

ເພື່ອຮັບປະກັນ ໃຫ້ຜູ້ພັດທະນາ ແລະ ຜູ້ລົງທຶນ ໃນນິຄົມອຸດສາຫະກຳ ໄດ້ຮັບຂໍ້ມູນຂ່າວສານ ກ່ຽວ ກັບການພັດທະນາ ແລະ ການລົງທຶນ ນິຄົມອຸດສາຫະກຳ ຢ່າງຄົບຖ້ວນ, ເອກະພາບ, ວ່ອງໄວ, ທັນການ ແລະ ສາມາດຕັດສິນໃຈ ພັດທະນາ ແລະ ລົງທຶນໄດ້ນັ້ນ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ພະແນກອຸດ ສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕ້ອງສ້າງຂໍ້ມູນຂ່າວສານ ການພັດທະນາ ແລະ ການລົງທຶນ.

ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເປັນ ຜູ້ເກັບກຳ ແລະ ສັງລວມບັນດາຂໍ້ມູນ ກ່ຽວກັບການພັດທະນາ ແລະ ການລົງທຶນ ນິຄົມອຸດສາຫະກຳ ເພື່ອສ້າງ ເຄືອຂ່າຍ, ສະໜອງ ແລະ ແລກປ່ຽນຂໍ້ມູນ ຂ່າວສານ ເປັນຕົ້ນ, ການໂຄສະນາ ຜ່ານລະບົບເວັບໄຊ, ປຶ້ມຄູ່ມື, ວາລະສານ, ແຜ່ນພັບໂຄສະນາ ກ່ຽວກັບການພັດທະນາ ແລະ ການລົງທຶນ ໃຫ້ຜູ້ມີຄວາມສົນໃຈ, ສະຖານທູດ, ກົງສຸນລາວ ຫຼື ຫ້ອງການຜູ້ຕາງໜ້າທາງດ້ານການຄ້າລາວ ປະຈຳຢູ່ຕ່າງປະເທດ ເພື່ອສະໜອງໃຫ້ຜູ້ຕ້ອງການ ພັດທະນາ ແລະ ລົງທຶນ.

ພາກທີ IV
ການນຳໃຊ້ແຮງງານ ແລະ ການຄຸ້ມຄອງ ດ້ານການເງິນ

ໝວດທີ 1
ການນຳໃຊ້ແຮງງານ

ມາດຕາ 44 ການນຳໃຊ້ ແລະ ພັດທະນາສີມືແຮງງານ

ຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ຕ້ອງປະສານສົມທົບກັບບັນດາຂະແໜງການກ່ຽວຂ້ອງ ກ່ຽວ ກັບການສ້າງກຳລັງແຮງງານ ໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງໃນແຕ່ລະນິຄົມອຸດສາຫະກຳ ເພື່ອຕອບ ສະໜອງຄວາມຕ້ອງການຂອງຜູ້ລົງທຶນ ໃນນິຄົມອຸດສາຫະກຳ.

ຜູ້ພັດທະນາ ແລະ ຜູ້ລົງທຶນ ຕ້ອງນຳໃຊ້ແຮງງານລາວເປັນບຸລິມະສິດ ແລະ ສ້າງແຜນພັດທະນາສີມື ແຮງງານ ຢ່າງເໝາະສົມຕາມຄວາມຕ້ອງການຂອງຕົນ ໂດຍໄດ້ຮັບການຍົກລະດັບຄວາມຮູ້ ແລະ ພັດທະນາສີມື ແຮງງານ ທັງຢູ່ພາຍໃນ ຫຼື ຕ່າງປະເທດ ຕາມຄວາມເໝາະສົມ.

ມາດຕາ 45 ການສ້າງໂຮງຮຽນວິຊາຊີບ ຫຼື ສູນຝຶກອົບຮົມ

ຜູ້ພັດທະນາ ນິຄົມອຸດສາຫະກຳ ຕ້ອງປະສານສົມທົບກັບຂະແໜງການແຮງງານ ແລະ ສະຫວັດດີການ ສັງຄົມ, ຂະແໜງການສຶກສາທິການ ແລະ ກິລາ ເພື່ອສ້າງໂຮງຮຽນວິຊາຊີບ ຫຼື ສູນຝຶກອົບຮົມໃຫ້ເໝາະສົມ ຕາມຂະໜາດ ແລະ ຈຸດພິເສດຂອງແຕ່ລະນິຄົມອຸດສາຫະກຳ ເພື່ອສ້າງແຮງງານສະໜອງໃຫ້ແກ່ການລົງທຶນຢູ່ ໃນນິຄົມອຸດສາຫະກຳຢ່າງພຽງພໍ ແລະ ຮັບປະກັນຄຸນນະພາບດ້ານສີມືແຮງງານ.

ມາດຕາ 46 ການຄຸ້ມຄອງ ແລະ ການນຳໃຊ້ແຮງງານ

ຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ຕ້ອງມີກົນໄກການເກັບກຳສະຖິຕິແຮງງານຢ່າງລະອຽດ, ສາ ມາດເກັບກຳໄດ້ທັງແຮງງານ ພາຍໃນ ແລະ ຕ່າງປະເທດ ທີ່ເຮັດວຽກໃນໄລຍະສັ້ນ ແລະ ໄລຍະຍາວ ເພື່ອສະຫຼຸບ ລາຍງານເປັນປະຈຳ ພ້ອມທັງປະສານສົມທົບກັບຜູ້ພັດທະນາ ເພື່ອເກັບກຳຄວາມຕ້ອງການຂອງແຮງງານ ແລະ ຈັດສັນແຮງງານໃຫ້ພຽງພໍກັບຄວາມຕ້ອງການ ໃນແຕ່ລະໄລຍະ. ພ້ອມດຽວກັນນັ້ນ ຕ້ອງສ້າງໜ່ວຍງານແຮງ ງານ ເພື່ອຄຸ້ມຄອງແຮງງານ ແລະ ໄກ່ເກ່ຍຂໍ້ຂັດແຍ່ງ ທາງດ້ານແຮງງານໃຫ້ທັນການ ແລະ ເປັນທຳ ໂດຍໃຫ້ມີ ສັນຍາແຮງງານ ແລະ ໄດ້ຮັບການຄຸ້ມຄອງຈາກລະບົບປະກັນສັງຄົມ ຕາມກົດໝາຍ ແລະ ລະບຽບການ.

ໝວດທີ 2
ການຄຸ້ມຄອງທາງດ້ານການເງິນ

ມາດຕາ 47 ການນຳເຂົ້າທຶນ ແລະ ການໂອນເງິນອອກໄປຕ່າງປະເທດ

ຜູ້ພັດທະນາ ແລະ ຜູ້ລົງທຶນຢູ່ໃນນິຄົມອຸດສາຫະກຳ ທີ່ເປັນຜູ້ລົງທຶນຕ່າງປະເທດ ສາມາດນຳທຶນເຂົ້າມາລົງທຶນໃນປະເທດ ແລະ ໂອນເງິນອອກໄປຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ສາມາດເຄື່ອນຍ້າຍເງິນຕາທີ່ຕິດພັນກັບເງິນລົງທຶນ, ເງິນກູ້ຢືມ, ລາຍຮັບ, ລາຍຈ່າຍ ລະຫວ່າງປະເທດ ຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ນິຕິກຳທີ່ກ່ຽວຂ້ອງ.

ມາດຕາ 48 ການນຳໃຊ້ເງິນຕາ

ການຊື້ ຂາຍ ແລະ ການຊຳລະສະສາງຢູ່ໃນ ນິຄົມອຸດສາຫະກຳ ໃຫ້ນຳໃຊ້ສະກຸນເງິນ ກີບ ເວັ້ນເສຍແຕ່ ລັດຖະບານໄດ້ຕົກລົງໃຫ້ຊຳລະເປັນເງິນຕາຕ່າງປະເທດ. ກໍລະນີມີການຕີມູນຄ່າ ຫຼື ແລກປ່ຽນຄືດໄລ່ມູນຄ່າເປັນເງິນຕາຕ່າງປະເທດ ແມ່ນໃຫ້ຖືເອົາອັດຕາແລກປ່ຽນຕາມທະນາຄານກຳນົດໃນມື້ຊຳລະ ແລະ ໃຫ້ດຳເນີນຜ່ານທະນາຄານທຸລະກິດທີ່ຜູ້ພັດທະນາ ແລະ ຜູ້ລົງທຶນມີບັນຊີເງິນຝາກສະເພາະ ຢູ່ໃນທະນາຄານທຸລະກິດນັ້ນ.

ມາດຕາ 49 ການຖືບັນຊີ

ຜູ້ພັດທະນາ ແລະ ຜູ້ລົງທຶນໃນນິຄົມອຸດສາຫະກຳ ຕ້ອງຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ ຂອງ ສປປ ລາວ, ໃນກໍລະນີຈຳເປັນ ກໍສາມາດນຳໃຊ້ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີ ຈາກກະຊວງການເງິນ.

ມາດຕາ 50 ການແຈ້ງ ພາສີ ແລະ ອາກອນ

ການແຈ້ງພາສີ ແລະ ອາກອນ ລວມທັງການເສຍຄ່າທຳນຽມຕ່າງໆ ຂອງນິຄົມອຸດສາຫະກຳ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ແລະ ຕ້ອງນຳໃຊ້ລະບົບທີ່ສາມາດເຊື່ອມຕໍ່ກັບລະບົບການຄຸ້ມຄອງຂໍ້ມູນລາຍຮັບ ສອຍສາອາກອນ ຕາມກົດໝາຍກຳນົດ;

ເພື່ອອຳນວຍຄວາມສະດວກແກ່ການແຈ້ງພາສີ ແລະ ອາກອນ ສາມາດສ້າງຕັ້ງໜ່ວຍງານພາສີ ແລະ ອາກອນ ຢູ່ໃນນິຄົມອຸດສາຫະກຳ.

ພາກທີ V
ການຈັດຕັ້ງຄຸ້ມຄອງນິຄົມອຸດສາຫະກຳ

ມາດຕາ 51 ການຈັດຕັ້ງຄຸ້ມຄອງນິຄົມອຸດສາຫະກຳ

ການຈັດຕັ້ງຄຸ້ມຄອງນິຄົມອຸດສາຫະກຳ ປະກອບ ມີ ຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ປະຈຳຢູ່ແຕ່ລະນິຄົມອຸດສາຫະກຳ ເພື່ອເຮັດໜ້າທີ່ ໃນການຄຸ້ມຄອງ, ບໍລິການ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການພັດທະນາ ແລະ ການລົງທຶນ ໃນນິຄົມອຸດສາຫະກຳ.

ສຳລັບນິຄົມອຸດສາຫະກຳທີ່ຢູ່ໃນເຂດເສດຖະກິດພິເສດ ໃຫ້ປະຕິບັດຕາມກົນໄກການຄຸ້ມຄອງ ເຂດເສດຖະກິດພິເສດ.

ມາດຕາ 52 ຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ

ຫ້ອງການຄຸ້ມຄອງ ນິຄົມອຸດສາຫະກຳ ແມ່ນກົງຈັກການຈັດຕັ້ງໜຶ່ງຂອງລັດ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ ໂດຍອົງການປົກຄອງ ນະຄອນຫຼວງ, ແຂວງ ຕາມການສະເໜີຂອງພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ, ບົນພື້ນຖານການປຶກສາຫາລື ແລະ ເອກະພາບກັບກະຊວງອຸດສາຫະກຳ ແລະ ການຄ້າ.

ກົງຈັກການຈັດຕັ້ງຂອງຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ມີ ຫ້ອງການ ແລະ ໜ່ວຍງານວິຊາການ ຈຳນວນໜຶ່ງ ຕາງໜ້າຈາກຂະແໜງການທີ່ກ່ຽວຂ້ອງ ປະກອບເປັນໜ່ວຍງານ ບໍລິການປະຕູດຽວ ຢູ່ພາຍໃນ ນິຄົມອຸດສາຫະກຳ, ລາຍລະອຽດໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ຫົວໜ້າຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ມີຕຳແໜ່ງບໍລິຫານ ປະເພດ 4 ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ບ່ອນນິຄົມອຸດສາຫະກຳຕັ້ງຢູ່ ບົນພື້ນຖານການປຶກສາຫາລື ແລະ ເອກະພາບກັບ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ.

ຮອງຫົວໜ້າຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ບ່ອນນິຄົມອຸດສາຫະກຳຕັ້ງຢູ່.

ຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ມີການປະທັບ ເພື່ອໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດ ຖະການຂອງຕົນ. ວຽກງານວິຊາການ, ບຸກຄະລາກອນ ແລະ ງົບປະມານຂອງຫ້ອງການຄຸ້ມຄອງນິຄົມອຸດສາ ຫະກຳ ແມ່ນຂຶ້ນກັບພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ.

ມາດຕາ 53 ສິດ ແລະ ໜ້າທີ່ຂອງຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ

ຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊຸກຍູ້, ຕິດຕາມ ແລະ ກວດກາການພັດທະນາ ແລະ ການລົງທຶນ ໃນນິຄົມອຸດສາຫະກຳ ເພື່ອໃຫ້ດຳ ເນີນຖືກຕ້ອງ ຕາມແຜນພັດທະນານິຄົມອຸດສາຫະກຳ ແລະ ນິຕິວິທີ-ເຕັກນິກ;
2. ຄົ້ນຄວ້າ ແລະ ພິຈາລະນາ ອອກໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນ ດຳເນີນກິດຈະການໂຮງງານ, ໃບຢັ້ງຢືນແຜນການນຳເຂົ້າປະຈຳປີ, ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, ໃບ ອະນຸຍາດປຸກສ້າງ, ໃບຢັ້ງຢືນສິ່ງແວດລ້ອມໃນຂອງບັນດາໂຮງງານພາຍໃນນິຄົມອຸດສາຫະກຳ, ໃບຢັ້ງ ຢືນສິດນຳໃຊ້ທີ່ດິນ ແລະ ໃບອະນຸຍາດອື່ນໆ ສຳລັບການດຳເນີນທຸລະກິດໃນນິຄົມອຸດສາຫະກຳ;
3. ຄຸ້ມຄອງ, ຕິດຕາມ, ອະນຸຍາດ ຫຼື ຢັ້ງຢືນ ການນຳເຂົ້າ ເຄື່ອງຈັກ, ວັດຖຸດິບ, ວັດຖຸປະກອນ, ພາຫາ ນະຮັບໃຊ້ການຜະລິດ, ວັດສະດຸກໍ່ສ້າງ ແລະ ການສົ່ງອອກສິນຄ້າ;
4. ຮັບ ແລະ ບໍລິການ ຄຳຮ້ອງຂໍວີຊາ, ບັດອະນຸຍາດເຮັດວຽກ ແລະ ບັດອະນຸຍາດພັກເຊົາຂອງຜູ້ພັດທະ ນາ ແລະ ຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍຄອບຄົວ, ນັກວິຊາການ ແລະ ແຮງງານຕ່າງປະເທດ ເພື່ອ ສະເໜີຂະແໜງການທີ່ກ່ຽວຂ້ອງ ພິຈາລະນາ;
5. ປະສານສົມທົບພະແນກການຂັ້ນແຂວງ, ອົງການປົກຄອງຂັ້ນເມືອງ ແລະ ຂັ້ນຕາແສງ ບ່ອນນິຄົມອຸດ ສາຫະກຳຕັ້ງຢູ່ ເພື່ອຮັບປະກັນວຽກງານປ້ອງກັນຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບ ຮຽບຮ້ອຍ ລວມທັງຄຸ້ມຄອງ ຜູ້ຢູ່ອາໄສ ແລະ ຜູ້ອອກແຮງງານ ພາຍໃນນິຄົມອຸດສາຫະກຳ;
6. ຮັບ ແລະ ພິຈາລະນາ ແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ ໃນນິຄົມອຸດສາຫະກຳ ຫຼື ປະສານສົມທົບກັບຂະ ແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂ;
7. ເກັບຄ່າທຳນຽມ ແລະ ຄ່າບໍລິການ ໂດຍສອດຄ່ອງກັບລະບຽບການ;
8. ຊຸກຍູ້ ແລະ ຕິດຕາມ ກວດກາ ການປະຕິບັດພັນທະພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຂອງຜູ້ພັດທະນາ ແລະ ຜູ້ລົງທຶນ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ສັນຍາພັດທະນານິຄົມອຸດສາຫະກຳ;
9. ເກັບກຳຂໍ້ມູນ ແລະ ສະຖິຕິ ກ່ຽວກັບການພັດທະນາ ແລະ ການລົງທຶນ ໃນນິຄົມອຸດສາຫະກຳ;
10. ເປັນໃຈກາງປະສານງານ, ຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຜູ້ພັດທະນາ ແລະ ຜູ້ລົງທຶນ ໃນນິຄົມອຸດສາຫະກຳ;

11. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

ພາກທີ VI
ຂໍ້ຫ້າມ

ມາດຕາ 54 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ອອກໃບອະນຸຍາດ ນຳໃຊ້ ຫຼື ຜັດທະນາທີ່ດິນ ໃນນິຄົມອຸດສາຫະກຳ ທີ່ບໍ່ຢູ່ໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ;
2. ດຳເນີນທຸລະກິດ ທີ່ບໍ່ຖືກຕ້ອງ ຫຼື ບໍ່ໄດ້ຮັບອະນຸຍາດ ໃນນິຄົມອຸດສາຫະກຳ;
3. ສ້າງອຸປະສັກ, ກີດຂວາງ ຫຼື ຂັດຂວາງ ທຸກຮູບແບບ ຕໍ່ການຜັດທະນາ ແລະ ລົງທຶນ ໃນນິຄົມອຸດສາຫະກຳ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

ມາດຕາ 55 ຂໍ້ຫ້າມສຳລັບຜູ້ຜັດທະນາ

ຫ້າມ ຜູ້ຜັດທະນາ ມີພຶດຕິກຳ ດັ່ງນີ້:

1. ຜັດທະນານິຄົມອຸດສາຫະກຳ ໂດຍບໍ່ຖືກຕ້ອງ ຕາມທີ່ໄດ້ຮັບອະນຸຍາດ;
2. ດຳເນີນທຸລະກິດ ໂດຍບໍ່ຖືກຕ້ອງ ຕາມການອະນຸຍາດ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
3. ສົມຮູ້ຮ່ວມຄິດ ແລະ ໃຫ້ສິນບົນ ແກ່ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເພື່ອໃຫ້ໄດ້ມາ ຊຶ່ງຜົນປະໂຫຍດ ທີ່ຂັດກັບກົດໝາຍ ແລະ ລະບຽບການ;
4. ປອມແປງ ເອກະສານ, ປິດບັງ ຂໍ້ມູນຄວາມຈິງ, ຫຼົບຫຼີກ ການປະຕິບັດພັນທະ, ປິດບັງ ລາຍຮັບ, ກຳໄລ ແລະ ເຊື່ອງອຳ ການກະທຳຜິດ ທີ່ຕິດພັນກັບການເສຍພາສີ ແລະ ອາກອນ;
5. ໃສ່ຮ້າຍ ປ້າຍສີ ຫຼື ໂຄສະນາທັບຖົມ ການຈັດຕັ້ງ, ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
6. ເອົາໃບອະນຸຍາດສ້າງຕັ້ງນິຄົມອຸດສາຫະກຳ ໃຫ້ຜູ້ອື່ນເຊົ່າ, ນຳໃຊ້ ຫຼື ໂອນ ໃຫ້ບຸກຄົນອື່ນ;
7. ຜັດທະນາໂຄງລ່າງພື້ນຖານຂອງນິຄົມອຸດສາຫະກຳ ໂດຍບໍ່ສອດຄ່ອງ ຫຼື ບໍ່ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ ທີ່ຖືກຮັບຮອງແລ້ວ;
8. ນຳໃຊ້ແຮງງານ ໂດຍບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

ມາດຕາ 56 ຂໍ້ຫ້າມສຳລັບຜູ້ລົງທຶນ

ຫ້າມ ຜູ້ລົງທຶນ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ໂດຍບໍ່ຖືກຕ້ອງ ຕາມການອະນຸຍາດ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
2. ສົມຮູ້ຮ່ວມຄິດ ແລະ ໃຫ້ສິນບົນ ກັບເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງ ເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດ ທີ່ຂັດກັບກົດໝາຍ ແລະ ລະບຽບການ;
3. ໃສ່ຮ້າຍ ປ້າຍສີ ຫຼື ໂຄສະນາທັບຖົມ ການຈັດຕັ້ງ, ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
4. ປອມແປງ ເອກະສານ, ປິດບັງຂໍ້ມູນຄວາມຈິງ, ຫຼົບຫຼີກ ການປະຕິບັດພັນທະ, ປິດບັງລາຍຮັບ, ກຳໄລ ແລະ ເຊື່ອງອຳການກະທຳຜິດ ທີ່ຕິດພັນກັບການເສຍພາສີ ແລະ ອາກອນ;
5. ສ້າງຕັ້ງ, ຍົກຍ້າຍ, ປ່ຽນຊື່ໂຮງງານ, ຂາຍ, ເຊົ່າ ຫຼື ປ່ຽນ ຜູ້ດຳເນີນກິດຈະການໂຮງງານ ແລະ ດຳເນີນກິດຈະການໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;

6. ນຳເຂົ້າ ວັດຖຸດິບ, ວັດຖຸປະກອບ ມາໃນນິຕິບຸກຄົນອຸດສາຫະກຳ ແລະ ສິ່ງອອກຜະລິດຕະພັນ ໂດຍບໍ່ໄດ້ຮັບອະນຸຍາດ;
7. ນຳໃຊ້ແຮງງານ ໂດຍບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
8. ປ່ອຍ ຫຼື ຖິ້ມ ສິ່ງເສດເຫຼືອ ທີ່ບໍ່ໄດ້ຜ່ານຂະບວນການບຳບັດ ຕາມກົດໝາຍ ແລະ ລະບຽບການ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

ມາດຕາ 57 ຂໍ້ຫ້າມສຳລັບ ເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງ

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ອຳນາດ, ໜ້າທີ່ ຫຼື ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ;
2. ສົມຮູ້ຮ່ວມຄິດ, ເອື້ອອຳນວຍຄວາມສະດວກ ໃຫ້ແກ່ຜູ້ພັດທະນາ ແລະ ຜູ້ລົງທຶນ ໃນນິຕິບຸກຄົນອຸດສາຫະກຳ ເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດ ທີ່ຂັດກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
3. ຮັບສິນບົນຈາກຜູ້ພັດທະນາ ແລະ ລົງທຶນ ໃນນິຕິບຸກຄົນອຸດສາຫະກຳ;
4. ແກ່ຍາວເວລາ ຫຼື ກີດໜ່ວງ ການພິຈາລະນາເອກະສານຕ່າງໆ ຂອງຜູ້ລົງພັດທະນາ ຫຼື ຜູ້ລົງທຶນໂດຍບໍ່ມີເຫດຜົນ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

ພາກທີ VII
ການຄຸ້ມຄອງ ແລະ ກວດກາ ວຽກງານນິຕິບຸກຄົນອຸດສາຫະກຳ

ໝວດທີ 1
ການຄຸ້ມຄອງວຽກງານນິຕິບຸກຄົນອຸດສາຫະກຳ

ມາດຕາ 58 ອົງການຄຸ້ມຄອງ

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຄຸ້ມຄອງວຽກງານນິຕິບຸກຄົນອຸດສາຫະກຳ ໂດຍກົງ ແລະ ເປັນເຈົ້າການ ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານນິຕິບຸກຄົນອຸດສາຫະກຳ ປະກອບມີ:

1. ກະຊວງອຸດສາຫະກຳ ແລະ ການຄ້າ;
2. ຄະນະກຳມະການສົ່ງເສີມການລົງທຶນ;
3. ອົງການປົກຄອງ ນະຄອນຫຼວງ, ແຂວງ;
4. ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ;
5. ຂະແໜງການອື່ນ.

ມາດຕາ 59 ສິດ ແລະ ໜ້າທີ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ

ໃນການຄຸ້ມຄອງວຽກງານນິຕິບຸກຄົນອຸດສາຫະກຳ ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ, ໂຄສະນາ, ເຜີຍແຜ່ ແລະ ຜັນຂະຫຍາຍ ກ່ຽວກັບ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ໃນການພັດທະນາ ແລະ ການລົງທຶນນິຕິບຸກຄົນອຸດສາຫະກຳ;
2. ປະສານສົມທົບ ກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ກຳນົດເຂດອຸດສາຫະກຳ ເພື່ອພັດທະນາເປັນນິຕິບຸກຄົນອຸດສາຫະກຳ;

3. ເປັນເຈົ້າການຄົ້ນຄວ້າ ແລະ ພິຈາລະນາລົງນາມ ປົດບັນທຶກຄວາມເຂົ້າໃຈ ການສຶກສາຄວາມເປັນໄປໄດ້ ໃນການພັດທະນານິຄົມອຸດສາຫະກຳ;
4. ເປັນເຈົ້າການຄົ້ນຄວ້າ ແລະ ຮັບຮອງ ປົດວິພາກເສດຖະກິດ-ເຕັກນິກ ຫຼື ປົດສຶກສາຄວາມເປັນໄປໄດ້ ໃນການພັດທະນານິຄົມອຸດສາຫະກຳ;
5. ຮ່ວມ ຄົ້ນຄວ້າເນື້ອໃນສັນຍາ, ເຈລະຈາ ກັບຜູ້ສະເໜີພັດທະນານິຄົມອຸດສາຫະກຳ;
6. ອະນຸມັດ ການສ້າງຕັ້ງ, ປ່ຽນແປງ ແລະ ໂຈະ ຫຼື ຍົກເລີກ ບໍລິສັດ ພັດທະນານິຄົມອຸດສາຫະກຳ;
7. ຄົ້ນຄວ້າປະກອບຄຳເຫັນ ກ່ຽວກັບຄຳສະເໜີພັດທະນານິຄົມອຸດສາຫະກຳ ທີ່ນອນໃນເຂດເສດຖະກິດພິເສດ;
8. ຊີ້ນຳ, ຊຸກຍູ້ ແລະ ຕິດຕາມ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບນິຄົມອຸດສາຫະກຳ;
9. ຄົ້ນຄວ້າ ມີຄຳເຫັນໃນການສ້າງຕັ້ງຫ້ອງການຄຸ້ມຄອງນິຄົມອຸດສາະກຳ ແລະ ບຸກຄະລາກອນຂອງຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ;
10. ປະສານສົມທົບ ກັບຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງນິຄົມອຸດສາຫະກຳ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
11. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 60 ສິດ ແລະ ໜ້າທີ່ຂອງຄະນະກຳມະການສົ່ງເສີມການລົງທຶນ

ໃນການຄຸ້ມຄອງວຽກງານນິຄົມອຸດສາຫະກຳ ຄະນະກຳມະການສົ່ງເສີມການລົງທຶນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຄຳຮ້ອງຄຳສະເໜີຂອງຜູ້ລົງທຶນພັດທະນານິຄົມອຸດສາຫະກຳ ໃນເຂດເສດຖະກິດພິເສດ ແລະ ປະສານສົມທົບກັບຂະແໜງ ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອຄົ້ນຄວ້າຄຳສະເໜີ;
2. ເປັນໃຈກາງປະສານສົມທົບກັບຂະແໜງກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການສັງລວມ ການຄົ້ນຄວ້າ ລາຍງານລັດຖະບານ;
3. ສົມທົບກັບຂະແໜງການອຸດສາຫະກຳ ແລະ ການຄ້າ ຄົ້ນຄວ້າປົດບັນທຶກຄວາມເຂົ້າໃຈ ໃນການສຶກສາຄວາມເປັນໄປໄດ້ໃນການພັດທະນານິຄົມອຸດສາຫະກຳ ໃນເຂດເສດຖະກິດພິເສດ;
4. ເປັນເຈົ້າການສົມທົບກັບຂະແໜງທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄົ້ນຄວ້າ ສັນຍາພັດທະນາໂຄງການພັດທະນານິຄົມອຸດສາຫະກຳ;
5. ພິຈາລະນາ ລົງນາມ, ການປ່ຽນແປງ ແລະ ການໂຈະ ຫຼື ຍົກເລີກ ສັນຍາພັດທະນານິຄົມອຸດສາຫະກຳ;
6. ໂຄສະນາ ເຜີຍແຜ່ຂໍ້ມູນ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບນິຄົມອຸດສາຫະກຳ ເພື່ອດຶງດູດການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນນິຄົມອຸດສາຫະກຳ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 61 ສິດ ແລະ ໜ້າທີ່ຂອງອົງການປົກຄອງນະຄອນຫຼວງ, ແຂວງ

ອົງການປົກຄອງນະຄອນຫຼວງ, ແຂວງ ບ່ອນນິຄົມອຸດສາຫະກຳຕັ້ງຢູ່ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບນິຄົມອຸດສາຫະກຳ ໃຫ້ສັງຄົມ, ນັກລົງທຶນ ແລະ ປະຊາຊົນ ຮັບຮູ້ ແລະ ໃຫ້ການສະໜັບສະໜຸນ;
2. ຊີ້ນຳ, ຄຸ້ມຄອງ, ອຳນວຍຄວາມສະດວກ ແລະ ຕິດຕາມ ການເຄື່ອນໄຫວຂອງນິຄົມອຸດສາຫະກຳ;
3. ຈັດສັນ, ສຳຫຼວດ, ແກ້ໄຂ ແລະ ປະເມີນ ກ່ຽວກັບບັນຫາທີ່ດິນ ເພື່ອທົດແທນຄ່າເສຍຫາຍ ຕໍ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ;

4. ພິຈາລະນານະໂຍບາຍລົງທຶນດຶງດູດການລົງທຶນພິເສດສູ່ທ້ອງຖິ່ນຂອງຕົນ ໂດຍສອດຄ່ອງກັບລະບຽບກົດໝາຍ ແລະ ດຳລັດສະບັບນີ້;
5. ພິຈາລະນາ ສ້າງຕັ້ງຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ແລະ ແຕ່ງຕັ້ງ ບຸກຄະລາກອນ ເພື່ອປະຕິບັດໜ້າທີ່ ຢູ່ຫ້ອງການດັ່ງກ່າວ;
6. ສ້າງກິດຈະກຳ ທີ່ຕິດພັນກັບການພັດທະນາ ແລະ ການລົງທຶນ ໃນນິຄົມອຸດສາຫະກຳ ເພື່ອໃຫ້ປະຊາຊົນ ໄດ້ຜົນປະໂຫຍດຮ່ວມ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 62 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ

ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ, ໂຄສະນາ ແລະ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບນິຄົມອຸດສາຫະກຳ ພ້ອມທັງຈັດຕັ້ງປະຕິບັດ;
2. ຜັນຂະຫຍາຍ ວຽກງານການສົ່ງເສີມ ແລະ ຄຸ້ມຄອງການພັດທະນານິຄົມອຸດສາຫະກຳ ຕາມການແບ່ງຂັ້ນຄຸ້ມຄອງ;
3. ຄົ້ນຄວ້າ ກ່ຽວກັບການສ້າງຕັ້ງ ຫຼື ຍຸບເລີກ ຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ເພື່ອສະເໜີອົງການປົກຄອງແຂວງ, ນະຄອນຫຼວງ ພິຈາລະນາຮັບຮອງ;
4. ຊີ້ນຳ ແລະ ຕິດຕາມ ກວດກາ ການເຄື່ອນໄຫວວຽກງານຂອງຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ;
5. ຕິດຕາມ ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານນິຄົມອຸດສາຫະກຳ, ສັນຍາພັດທະນານິຄົມອຸດສາຫະກຳ, ແຜນພັດທະນາໂຄງການ, ແຜນການ, ແຜນງານ ແລະ ໂຄງການການລົງທຶນ ໃນແຕ່ລະໄລຍະ;
6. ຄົ້ນຄວ້າ ແລະ ປະກອບ ບຸກຄະລາກອນຂັ້ນຂອງຕົນ ປະຈຳຫ້ອງການຄຸ້ມຄອງນິຄົມອຸດສາຫະກຳ ເພື່ອສະເໜີຕໍ່ຂັ້ນເທິງ ພິຈາລະນາ;
7. ປະສານສົບທົບ ກັບ ພະແນກ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອດຳເນີນການຊົດເຊີຍ ແລະ ທົດແທນຄ່າເສຍຫາຍ ທີ່ໄດ້ຮັບຜົນກະທົບຈາກການພັດທະນານິຄົມອຸດສາຫະກຳ;
8. ສະເໜີຕໍ່ອົງການປົກຄອງ ແຂວງ, ນະຄອນຫຼວງວຽງຈັນ ເພື່ອສະເໜີໃຫ້ລັດຖະບານພິຈາລະນາກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ ທີ່ເຫັນວ່າບໍ່ສອດຄ່ອງກັບສະພາບຄວາມເປັນຈິງຂອງການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;
9. ຮັບ ແລະ ພິຈາລະນາ ຄຳຮ້ອງ, ຄຳສະເໜີ ກ່ຽວກັບວຽກງານນິຄົມອຸດສາຫະກຳ;
10. ປະສານສົມທົບ ກັບພະແນກການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານນິຄົມອຸດສາຫະກຳ;
11. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 63 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ

ໃນການຄຸ້ມຄອງວຽກງານນິຄົມອຸດສາຫະກຳ ຂະແໜງການ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ປະສານສົມທົບ ກັບຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານນິຄົມອຸດສາຫະກຳ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ.

ໝວດທີ 2
ການກວດກາວຽກງານນິຕິບຸກຄົນ

ມາດຕາ 64 ອົງການກວດກາ

ອົງການກວດກາວຽກງານນິຕິບຸກຄົນ ປະກອບດ້ວຍ:

1. ອົງການກວດກາພາຍໃນຊຶ່ງ ແມ່ນ ອົງການດຽວກັນກັບ ອົງການຄຸ້ມຄອງວຽກງານຄຸ້ມຄອງນິຕິບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 63 ຂອງດຳລັດສະບັບນີ້;
2. ອົງການກວດກາພາຍນອກຊຶ່ງ ແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ ແລະ ອົງການກວດສອບແຫ່ງລັດ.

ມາດຕາ 65 ເນື້ອໃນການກວດກາ

ການກວດກາວຽກງານນິຕິບຸກຄົນ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ນະໂຍບາຍ, ກົດໝາຍ, ສັນຍາການພັດທະນານິຕິບຸກຄົນ ແລະ ລະບຽບການ ກ່ຽວກັບວຽກງານນິຕິບຸກຄົນ;
2. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ ແລະ ພະນັກງານ ທີ່ຮັບຜິດຊອບວຽກງານນິຕິບຸກຄົນ;
3. ການປະຕິບັດຂັ້ນຕອນຂອງການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ;
4. ການປົກປັກຮັກສາສິ່ງແວດລ້ອມ ຕາມແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ລວມທັງຜົນກະທົບຕໍ່ຊັບສິນຂອງລັດ, ປະຊາຊົນ, ຜູ້ພັດທະນາ ແລະ ຜູ້ລົງທຶນໃນນິຕິບຸກຄົນ;
5. ການປະຕິບັດມາດຕະຖານໂຮງງານ ແລະ ຄວາມປອດໄພຂອງຜູ້ອອກແຮງງານ;
6. ການປະຕິບັດກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ.

ອົງການກວດກາວຽກງານນິຕິບຸກຄົນ ມີສິດສະເໜີມາດຕະການແກ້ໄຂ ຕໍ່ຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາ ໃນກໍລະນີພົບເຫັນການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານນິຕິບຸກຄົນ.

ມາດຕາ 66 ຮູບການ ການກວດກາ

ການກວດກາວຽກງານນິຕິບຸກຄົນ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາ ແບບກະທັນຫັນ.

ການກວດກາ ຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາ ທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ.

ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າຊຶ່ງ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາ ແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາ ສາມາດດຳເນີນການກວດກາ ດ້ານເອກະສານ ແລະ ການປະຕິບັດຕົວຈິງ ຢູ່ສະຖານທີ່ປະຕິບັດງານ.

ພາກທີ VIII
ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 67 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກຳລັດສະບັບນີ້ ເປັນຕົ້ນ ການພັດທະນາ, ການລົງທຶນ ແລະ ການບໍລິຫານ ວຽກງານນິຄົມອຸດສາຫະກຳ ທີ່ມີປະສິດທິຜົນ, ດຶງດູດ ແລະ ຊຸກຍູ້ການພັດທະນາ ແລະ ການລົງທຶນ ໃນນິຄົມອຸດສາຫະກຳ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ສັງຄົມຂອງຊາດ ຈະໄດ້ຮັບການອຳນວຍຄວາມສະດວກ, ການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 68 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກປະຕິບັດ ມາດຕະການ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງ ອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

ພາກທີ IX
ບົດບັນຍັດສຸດທ້າຍ

ມາດຕາ 69 ການຈັດຕັ້ງປະຕິບັດ

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດກຳລັດສະບັບນີ້ ໃຫ້ມີປະ ສິດທິພາບ ແລະ ປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ ການຮ່ວມມື ປະຕິບັດກຳລັດສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 70 ຜົນສັກສິດ

ກຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 23 ກໍລະກົດ 2025 ເປັນຕົ້ນໄປ.

ຜູ້ພັດທະນາ ແລະ ຜູ້ລົງທຶນໃນນິຄົມອຸດສາຫະກຳ ທີ່ໄດ້ຮັບນະໂຍບາຍດ້ານ ພາສີ, ອາກອນ, ນະໂຍ ບາຍສົ່ງເສີມດ້ານການນຳໃຊ້ທີ່ດິນ ແລະ ນະໂຍບາຍອື່ນ ຕາມສັນຍາ ທີ່ໄດ້ເຊັນກັບລັດຖະບານ ກ່ອນກຳລັດສະ ບັບນີ້ ມີຜົນສັກສິດ ໃຫ້ສືບຕໍ່ປະຕິບັດຕາມສັນຍາ ຈົນກວ່າອາຍຸຂອງສັນຍາ ຈະສິ້ນສຸດ.

ຕາງໜ້າລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ